

ບົດລາຍງານສັງລວມປະສິດທິຜົນຂອງການພັດທະນາ

# ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ້າວພົ້ນຈາກສະພາບປະເທດດ້ອຍພັດທະນາ

ASIAN DEVELOPMENT BANK

ບົດລາຍງານສັງລວມປະສິດທິຜົນຂອງການພັດທະນາ

# ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ

## ກ້າວພົ້ນຈາກສະພາບປະເທດດ້ອຍພັດທະນາ

ASIAN DEVELOPMENT BANK

ພາຍໃຕ້ ລິຂະສິດອະນຸຍາດ 3.0 IGO (CC BY 3.0 IGO)

© 2017 ທະນາຄານພັດທະນາອາຊີ
ຖະໜົນ 6 ເອດີບີ, ເມືອງ ແມນດາລູຢົງ, 1550 ເມໂທຣ ນະຄອນມະນີລາ, ປະເທດຟີລິປິນ
ໂທລະສັບ +63 2 632 4444; ແຟັກ +63 2 636 2444
www.adb.org

ບາງລິຂະສິດແມ່ນສະຫງວນໄວ້. ພິມໃນປີ 2017.

ເອກະສານສິ່ງພິມເລກທີ BRF179048-2
DOI: http://dx.doi.org/10.22617/BRF179048-2

ການສະແດງຄຳຄິດເຫັນໃນເອກະສານສະບັບນີ້ ແມ່ນຄຳຄິດເຫັນຂອງບັນດາຜູ້ຂຽນ ຊຶ່ງບໍ່ຈຳເປັນຕ້ອງໝາຍເຖິງທັດສະນະ ແລະ
ນະໂຍບາຍຕ່າງໆຂອງ ທະນາຄານພັດທະນາອາຊີ (ເອດີບີ) ຫຼື ຂອງສະພາບໍລິຫານ ຫຼື ບັນດາລັດຖະບານທີ່ພວກເຂົາຕາງໜ້າ.
ໂດຍການລະບຸເຖິງ ຫຼື ອ້າງອີງເຖິງເຂດແດນໃດໜຶ່ງສະເພາະ ຫຼື ພື້ນທີ່ທາງພູມມີສາດ ຫຼື ການນຳໃຊ້ຄຳວ່າ “ປະເທດ” ຢູ່ໃນເອກະສານນີ້,
ທະນາຄານພັດທະນາອາຊີ ບໍ່ມີເຈດຕະນາເພື່ອໃຊ້ໃນການຕັດສິນຖານະທາງກົດໝາຍ ຫຼື ທາງດ້ານອື່ນຂອງເຂດແດນ ຫຼື ເຂດພື້ນທີ່ໃດໜຶ່ງ.

ວຽກດັ່ງກ່າວ ແມ່ນມີໄວ້ພາຍໃຕ້ ລິຂະສິດອະນຸຍາດ 3.0 IGO (CC BY 3.0 IGO)
https://creativecommons.org/licenses/by/3.0/igo/. ໂດຍການນຳໃຊ້ເນື້ອໃນສິ່ງພິມນີ້, ທ່ານຕົກລົງເຫັນດີ ມີພັນທະຕາມ
ເງື່ອນໄຂຂອງໃບອະນຸຍາດນີ້. ສຳລັບຄຸນລັກສະນະສະເພາະ, ການແປ, ການປັບປຸງ ແລະ ການອະນຸຍາດ, ກະລຸນາອ່ານບັນດາຂໍ້ບັນຍັດ ແລະ
ເງື່ອນໄຂຂອງການນຳໃຊ້ທີ່ເວັບໄຊ້: https://www.adb.org/terms-use#openaccess

ລິຂະສິດ CC ນີ້ ບໍ່ນຳໃຊ້ໄດ້ກັບ ສິ່ງພິມທີ່ບໍ່ແມ່ນລິຂະສິດຂອງເອດີບີທີ່ບັນຈຸຢູ່ໃນເອກະສານນີ້. ກະລຸນາຕິດຕໍ່
pubsmarketing@adb.org ຖ້າທ່ານມີຄຳຖາມ ຫຼື ຄຳຄິດເຫັນທີ່ກ່ຽວກັບເນື້ອໃນ ຫຼື ການອະນຸຍາດນຳໃຊ້.
ທຸກການປ່ຽນແປງກ່ຽວກັບເນື້ອໃນຂອງບັນດາສິ່ງພິມຂອງ ເອດີບີ ທີ່ໄດ້ຮັບການເຜີຍແຜ່ແລ້ວອາດບັນຈຸໄວ້ໃນເວັບໄຊຕໍ່ໄປນີ້
http://www.adb.org/publications/corrigenda

ໝາຍເຫດ:
ໃນສິ່ງພິມເຫຼັ້ມນີ້, “$” ໝາຍເຖິງ ສະກຸນເງິນໂດລາສະຫະລັດອາເມລິກາ, ແລະ “KN” ໝາຍເຖິງ ສະກຸນເງິນກີບຂອງ ສປປ ລາວ.
ເອດີບີ ຮັບຮູ້ວ່າ “ປະເທດລາວ” ມີຄວາມໝາຍອັນດຽວກັນກັບປະເທດສາທາລະນະລັດປະຊາທິປະໄຕປະຊາຊົນລາວ.
ຮູບພາບຕ່າງທັງໝົດ ແມ່ນມາຈາກ ເອດີບີ.

ພິມໃສ່ເຈ້ຍທີ່ນຳກັບມາໃຊ້ຄືນໃໝ່

# ສາລະບານ

ດັດສະນີໝາຍດ້ານການພັດທະນາຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ iv

ສປປ ລາວ ແລະ ການຮ່ວມມືກັບເອດີບີ 1

ການປະກອບສ່ວນຂອງເອດີບີ ເຂົ້າໃນການພັດທະນາ ແລະ ການຫຼຸດຜ່ອນຄວາມທຸກຍາກ 3

ການປະກອບສ່ວນຂອງ ເອດີບີ ເຂົ້າໃນການພັດທະນາເສດຖະກິດ ແລະ ສັງຄົມໃນສາທະລະນະລັດປະຊາທິປະໄຕປະຊາຊົນລາວ 4

ການຮ່ວມມື ແລະ ການເຊື່ອມໂຍງກັບພາກພື້ນ—ການຊ່ວຍເຫຼືອຂ້າມພົມແດນ 4

ພະລັງງານ—ການສະໜອງໄຟຟ້າພາຍໃນ ແລະ ຕ່າງປະເທດ 6

ກະສິກຳ ແລະ ຊັບພະຍາກອນທຳມະຊາດ—ຈາກການເຮັດກະສິກຳກຸ້ມຕົນເອງ ໄປສູ່ທຸລະກິດກະສິກຳ 6

ຊັບພະຍາກອນທຳມະຊາດ ແລະ ການປ່ຽນແປງສະພາບດິນຟ້າອາກາດ—ການສ້າງເງື່ອນໄຂໃນການຮັບມືກັບການປ່ຽນແປງສະພາບດິນຟ້າອາກາດ 7

ນ້ຳປະປາແລະສຸຂະພິບານ—ການປັບປຸງຕົວເມືອງ 8

ການສຶກສາ—ນັກສຶກສາຮຽນຈົບທີ່ກຽມພ້ອມຕໍ່ຄວາມຕ້ອງການຕະຫຼາດແຮງງານ 9

ສາທາລະນະສຸກ—ການປັບປຸງການດູແລຮັກສາສຸຂະພາບແມ່, ເດັກແດງ ແລະ ເດັກນ້ອຍ 11

ການພັດທະນາຂະແໜງການເອກະຊົນ—ພັດທະນາທຸລະກິດ 12

ການປົກຄອງບໍລິຫານ ແລະ ການຄຸ້ມຄອງລັດ: ລັດທີ່ເຂັ້ມແຂງຂຶ້ນ 13

ການປັບປຸງປະສິດທິຜົນໃນການປະຕິບັດງານ ແລະ ການຈັດຕັ້ງໃຫ້ດີຂຶ້ນ 14

ການຮ່ວມມືກັບອົງການຈັດຕັ້ງທາງສັງຄົມລວມທັງອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ 14

ສິ່ງທ້າທາຍ ແລະ ເປົ້າໝາຍໃນອະນາຄົດ 15

# ດັດສະນີໝາຍດ້ານການພັດທະນາຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

| | |
|---|---|
| ບໍ່ແມ່ນເປົ້າໝາຍສະຫັດສະວັດເພື່ອການພັດທະນາ | |
| ພົນລະເມືອງ, 2015 (ລ້ານຄົນ) | 6,5 |
| ອັດຕາການຂະຫຍາຍໂຕຂອງພົນລະເມືອງໃນແຕ່ລະປີ, 2005–2015 (%) | 1,5 |
| ອາຍຸສະເລ່ຍແຕ່ມື້ເກີດ, 2015 (ປີ) | |
| ເພດຍິງ | 65 |
| ເພດຊາຍ | 62 |
| ອັດຕາການຮູ້ໜັງສືຜູ້ໃຫຍ່, 2015 (%) | 85,0 |
| ເປີເຊັນຂອງພົນລະເມືອງໃນເຂດຕົວເມືອງ, 2015 | 33,0 |
| ເປົ້າໝາຍສະຫັດສະວັດເພື່ອການພັດທະນາ | |
| ພົນລະເມືອງທີ່ດໍາລົງຊີວິດດ້ວຍລາຍໄດ້ໜ້ອຍກວ່າ $1,90 ຕໍ່ວັນ, 2012 (%) | 16,7 |
| ພົນລະເມືອງທີ່ດໍາລົງຊີວິດຕໍ່າກວ່າເສັ້ນແບ່ງຄວາມທຸກຍາກແຫ່ງຊາດ, 2012 (%) | 23,2 |
| ອັດຕາການເຂົ້າຮຽນສຸດທິຊັ້ນປະຖົມສຶກສາສາມັນ. ປີງົບປະມານ 2015–2016 (%) | 98,7 |
| ອັດຕາການຈົບຊັ້ນປະຖົມສຶກສາ, ປີງົບປະມານ 2015–2016 (%) | 77,6 |
| ອັດຕາການຕາຍຂອງເດັກອາຍຸຕໍ່າກວ່າ 5 ປີ ຕໍ່ກັບເດັກເກີດ 1.000 ຄົນ, 2015 | 86,0 |
| ອັດຕາສ່ວນການຕາຍຂອງແມ່ເກີດລູກໃໝ່ຕໍ່ 100.000 ຄົນ, 2015 | 206,0 |
| ເປີເຊັນຂອງພົນລະເມືອງຢູ່ໃນຕົວເມືອງທີ່ນໍາໃຊ້ແຫຼ່ງນໍ້າດື່ມທີ່ໄດ້ຮັບການປັບປຸງ, 2015 | 89,9 |
| ເຂດຊົນນະບົດທີ່ມີເສັ້ນທາງ, 2015 (%) | 50,7 |
| ເຂດຊົນນະບົດທີ່ບໍ່ມີເສັ້ນທາງ, 2015 (%) | 12,7 |
| ອັດຕາຂອງຄົວເຮືອນທີ່ມີໄຟຟ້າໃຊ້, 2015 | 81,0 |

ໝາຍເຫດ: ປີງົບປະມານໃນ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ (ສປປ ລາວ) ແມ່ນເລີ່ມແຕ່ວັນທີ 1 ຕຸລາ ຫາ 30 ກັນຍາ. ເລີ່ມແຕ່ປີ 2017 ເປັນຕົ້ນໄປ. ປີງົບປະມານເລີ່ມຕົ້ນຕາມປີປະຕິທິນ.

ແຫຼ່ງຂໍ້ມູນ: ເອດີບີ. 2015. *ເອກະສານຂໍ້ມູນ ຂອງ ສປປ ລາວ ປີ 2015*. ມານີລາ; ສູນສະຖິຕິແຫ່ງຊາດ. ລັດຖະບານແຫ່ງ ສປປ ລາວ. 2015. *ສາທາລະນະລັດປະຊາທິປະໄຕປະຊາຊົນລາວ: ຜົນການສໍາຫຼວດພົນລະເມືອງແລະທີ່ຢູ່ອາໃສ ປີ 2015*. ນະຄອນຫຼວງວຽງຈັນ; ລັດຖະບານແຫ່ງ ສປປ ລາວ ແລະ ອົງການສະຫະປະຊາຊາດ. 2015. *ເປົ້າໝາຍສະຫະສະວັດເພື່ອການພັດທະນາ ແລະ ບົດຮຽນທີ່ຖອດຖອນໄດ້ ໄລຍະພາຍຫຼັງປີ-2015: ທົບທວນໂດຍຫຍໍ້*. ນະຄອນຫຼວງວຽງຈັນ; ທະນາຄານໂລກ. http://povertydata.worldbank.org/poverty/country/LAO

# ສປປ ລາວ ແລະ ການຮ່ວມມືກັບ ເອດີບີ

ດ້ວຍຄວາມອຸດົມສົມບູນທາງດ້ານຊັບພະຍາກອນທຳມະຊາດ ແລະ ເປັນທີ່ຕັ້ງຍຸດທະສາດໃຈກາງຂອງອະນຸພາກພື້ນແມ່ນ້ຳຂອງ (GMS), ສາທາລະນະລັດປະຊາທິປະໄຕປະຊາຊົນລາວ (ສປປ ລາວ) ໄດ້ອອກຈາກຄວາມຫຍຸ້ງຍາກ ແລະ ໂດດດ່ຽວໃນຫຼາຍທົດສະວັດ ຈົນກາຍມາເປັນໜຶ່ງໃນບັນດາປະເທດທີ່ມີເສດຖະກິດເຕີບໂຕຢ່າງໄວວາທີ່ສຸດໃນພາກພື້ນອາຊີຕາເວັນອອກສຽງໃຕ້ ນັບຕັ້ງແຕ່ປີຊຸມປີ 2011 ເປັນຕົ້ນມາ.

ການເຕີບໂຕນີ້ ແມ່ນໄດ້ຮັບແຮງຂັບເຄື່ອນໂດຍການຄ່ອຍຫັນປ່ຽນຈາກເສດຖະກິດປິດ ແລະ ລວມສູນມາເປັນເສດຖະກິດຕະຫຼາດ ແລະ ເປີດກວ້າງການຮ່ວມມືກັບຕ່າງປະເທດເພີ່ມຂຶ້ນ, ຊຶ່ງໄດ້ຮັບການສະໜັບສະໜູນດ້ວຍການເຊື່ອມໂຍງກັບບັນດາປະເທດໃກ້ຄຽງໃນອະນຸພາກພື້ນແມ່ນ້ຳຂອງ ແລະ ພາກພື້ນອື່ນໆຫຼາຍຂຶ້ນ. ໃນຂະນະທີ່ມີການຫັນປ່ຽນນັ້ນ, ສປປ ລາວ ຍັງຕ້ອງໄດ້ແກ້ໄຂບັນດາສິ່ງທ້າທາຍຕ່າງໆ ລວມທັງດ້ານພູມສາດທີ່ບໍ່ມີຊາຍແດນຕິດກັບທະເລ, ໂຄງລ່າງພື້ນຖານທີ່ຈຳກັດ, ຖານເສດຖະກິດທີ່ນ້ອຍ, ພາກເອກະຊົນຍັງບໍ່ທັນໄດ້ຮັບການພັດທະນາ ແລະ ກຳລັງແຮງງານໄວໜຸ່ມຍັງຂາດສີມືວິຊາສະເພາະທີ່ຈຳເປັນສຳລັບເສດຖະກິດທີ່ທັນສະໄໝ.

ຈາກປີ 2011 ຫາ 2015, ອັດຕາການເຕີບໂຕສະເລ່ຍຂອງລວມຍອດຜະລິດຕະພັນພາຍໃນເບື້ອງຕົ້ນ (ຈີດີພີ) ແມ່ນ 7,6% ຕໍ່ປີ, ຊຶ່ງເຮັດໃຫ້ ສປປ ລາວ ຍັງຢູ່ໃນເສັ້ນທາງກ້າວໄປສູ່ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາພາຍໃນປີ 2020. ໃນຊ່ວງໄລຍະດັ່ງກ່າວນີ້, ລາຍຮັບຈີດີພີ ຕໍ່ຫົວຄົນ ຫຼາຍກວ່າເທົ່າຕົວ, ໃນຂະນະທີ່ສັດສ່ວນຂອງປະຊາກອນທີ່ດຳລົງຊີວິດລຸ່ມເສັ້ນຄວາມທຸກຍາກແຫ່ງຊາດ ແມ່ນໄດ້ຫຼຸດລົງຈາກປະມານ 46% ໃນປີ 1992 ມາເປັນປະມານ 23% ໃນປີ 2012. ຍັງມີຫຼາຍຄາດໝາຍສູ້ຊົນຕົ້ນຕໍພາຍໃຕ້ ເປົ້າໝາຍສະຫັດສະວັດແຫ່ງການພັດທະນາ ໄດ້ບັນລຸເຕັມສ່ວນ ຫຼື ສ່ວນໃຫຍ່ຕາມກຳນົດເວລາຂອງປີ 2015, ເຖິງແມ່ນວ່າ ສປປ ລາວ ຍັງຄົງສືບຕໍ່ລ່າຊ້າໃນບາງຂົງເຂດ, ເຊັ່ນວ່າ ບັນຫາໂພຊະນາການຂອງເດັກນ້ອຍ ແລະ ການຕັດໄມ້ທຳລາຍປ່າ.

ທະນາຄານພັດທະນາອາຊີ (ເອດີບີ) ເປັນໜຶ່ງໃນຄູ່ຮ່ວມພັດທະນາທີ່ນຳໜ້າຂອງ ສປປ ລາວ ນັບແຕ່ການໃຫ້ເງິນກູ້ຄັ້ງທຳອິດໃນປີ 1970 ເປັນຕົ້ນມາ. ການຊ່ວຍເຫຼືອຂອງ ເອດີບີ ແມ່ນເຊື່ອມໂຍງຢ່າງໃກ້ຊິດກັບບັນດາບູລິມະສິດການພັດທະນາປະເທດ ຂອງລັດຖະບານແຫ່ງ ສປປ ລາວ ເຊັ່ນ: ການຫຼຸດຜ່ອນຄວາມທຸກຍາກ, ຂອງເສດຖະກິດຢ່າງທົ່ວເຖິງ, ການຍົກລະດັບໂຄງລ່າງພື້ນຖານ, ການພັດທະນາຊັບພະຍາກອນມະນຸດ, ແລະ ຮັບປະກັນຄວາມຍືນຍົງຂອງຊັບພະຍາກອນທຳມະຊາດ.

ສປປ ລາວ ອຸດົມສົມບູນດ້ວຍຊັບພະຍາກອນທຳມະຊາດ ແລະ ທີ່ຕັ້ງຍຸດທະສາດຢູ່ໃຈກາງຂອງອະນຸພາກພື້ນແມ່ນ້ຳຂອງ, ສປປ ລາວ ໄດ້ກ້າວອອກມາຈາກສະພາບຫຍຸ້ງຍາກສັບສົນ ແລະ ໂດດດ່ຽວໃນຫຼາຍທົດສະວັດ ເພື່ອກາຍເປັນໜຶ່ງໃນເສດຖະກິດທີ່ມີການຂະຫຍາຍຕົວໄວທີ່ສຸດໃນພາກພື້ນອາຊີຕາເວັນອອກສຽງໃຕ້ນັບຕັ້ງແຕ່ປີ 2011 ເປັນຕົ້ນມາ.

ຕາຕະລາງ 1: ການອະນຸມັດເງິນກູ້ຢືມ ແລະ ເງິນຊ່ວຍເຫຼືອລ້າ ແລະ ການເບີກຈ່າຍເງິນກູ້ຢືມຂອງ ເອດີບີ ໃນສາທາລະນະລັດປະຊາທິປະໄຕປະຊາຊົນລາວ

| | 1970-2009 | 2010 | 2011 | 2012 | 2013 | 2014 | 2015 | 2016 | ລວມທັງໝົດ |
|---|---|---|---|---|---|---|---|---|---|
| ການອະນຸມັດເງິນກູ້ຢືມແລະຊ່ວຍເຫຼືອ | 1.398,6 | 151,6 | 65,0 | 139,5 | 114,4 | 220,0 | 95,0 | 103,9 | 2.288,0 |
| ADF | 1.328,6 | 151,6 | 65,0 | 139,5 | 114,4 | 76,0 | 95,0 | 103,9 | 2.074,0 |
| OCR | 70,0 | | | | | 144,0 | | | 214,0 |
| ການເບີກຈ່າຍ | 1.176,7 | 57,4 | 71,2 | 63,8 | 72,6 | 75,3 | 65,1 | 51,8 | 1.633,9 |
| ADF | 1.158,5 | 57,2 | 71,1 | 63,8 | 72,6 | 75,3 | 65,1 | 51,8 | 1.615,5 |
| OCR | 18,2 | 0,2 | 0,1 | – | – | – | – | – | 18,5 |

ADF = ກອງທຶນພັດທະນາອາຊີ (Asian Development Fund), OCR = ແຫຼ່ງທຶນປົກກະຕິ (ordinary capital resources)

ແຫຼ່ງຂໍ້ມູນ: ຫ້ອງການ ເອດີບີ ປະຈຳ ສປປ ລາວ,

ໃນຂະແໜງການຕ່າງໆ, ເອດີບີຍັງແມ່ນໜຶ່ງໃນບັນດາຜູ້ໃຫ້ທຶນຊ່ວຍເຫຼືອຕົ້ນຕໍຂອງ ສປປ ລາວ. ຂໍ້ມູນການຊ່ວຍເຫຼືອໃຫ້ແກ່ການພັດທະນາທີ່ເປັນທາງການ (ODA) ໃນປີງົບປະມານ 2013–2014 ແລະ 2014–2015 ສະແດງໃຫ້ເຫັນວ່າ ເອດີບີ ແມ່ນຜູ້ໃຫ້ທຶນຊ່ວຍເຫຼືອທີ່ໃຫຍ່ທີ່ສຸດໃນການພັດທະນາຂະແໜງກະສິກຳ ແລະ ການພັດທະນາຊົນນະບົດ (15,3% ຂອງເງິນ ODA ທັງໝົດ, ດ້ານການສຶກສາ (24,0%), ການປົກຄອງບໍລິຫານ (22,9%), ແລະ ຂະແໜງການຄ້າ ແລະ ການພັດທະນາພາກເອກະຊົນ (31,3%). ເອດີບີ ຍັງເປັນຜູ້ໃຫ້ທຶນຊ່ວຍເຫຼືອລ້າເປັນອັນດັບສອງດ້ານສາທາລະນະສຸກ (10,3%), ແລະ ເປັນອັນດັບສາມດ້ານການພັດທະນາໂຄງລ່າງພື້ນຖານ (16,9%) ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (10,2%).

ກອງທຶນການຫຼຸດຜ່ອນຄວາມທຸກຍາກຂອງຍີ່ປຸ່ນທີ່ບໍລິຫານໂດຍເອດີບີ (JFPR) — ທີ່ສ້າງຕັ້ງຂຶ້ນໃນປີ 2000 ເພື່ອເປົ້າໝາຍສະເພາະໃນການລຶບລ້າງຄວາມທຸກຍາກ ແລະ ຊ່ວຍດ້ານການພັດທະນາສັງຄົມ. ກອງທຶນດັ່ງກ່າວ ໄດ້ໃຫ້ການສະໜັບສະໜູນຢ່າງກວ້າງຂວາງ ສຳລັບໂຄງການຕ່າງໆເພື່ອການຫຼຸດຜ່ອນຄວາມທຸກຍາກ, ສາທາລະນະສຸກ, ການສ້າງຄວາມສາມາດ, ແລະ ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ. ທຶນຊ່ວຍເຫຼືອລ້າ JFPR ທັງໝົດຂອງລັດຖະບານຍີ່ປຸ່ນທີ່ຊ່ວຍເຫຼືອ ສປປ ລາວ ແມ່ນສູງເຖິງ 21,74 ລ້ານໂດລາສະຫະລັດ. ນອກຈາກນັ້ນ, ນັກສຶກສາຫຼາຍກວ່າ 50 ຄົນຈາກ ສປປ ລາວ ກໍໄດ້ຮັບທຶນການສຶກສາຂັ້ນສູງກ່ວາປະລິນຍາຕີໃນຂົງເຂດທີ່ຕິດພັນກັບການພັດທະນາຈາກທຶນການສຶກສາ ເອດີບີ–ຍີ່ປຸ່ນ.

ການຊ່ວຍເຫຼືອສະສົມຂອງ ເອດີບີ ໃນແຕ່ລະຂະແໜງການຂອງ ສປປ ລາວ




ADB = ທະນາຄານພັດທະນາອາຊີ, ICT = ເຕັກໂນໂລຢີຂໍ້ມູນ ແລະ ການສື່ສານ.
ໝາຍເຫດ: ຂໍ້ມູນໃນວັນທີ 31 ທັນວາ 2016.
ແຫຼ່ງຂໍ້ມູນ: ກົມຄຸ້ມຄອງການເງິນ ແລະ ການບໍລິການປະຕິບັດງານຂອງ ເອດີບີ

# ການປະກອບສ່ວນຂອງ ເອດີບີ ເຂົ້າໃນ ການພັດທະນາ ແລະ ການຫຼຸດຜ່ອນ ຄວາມທຸກຍາກ

ຕາຕະລາງ 2: ຜົນງານດ້ານການພັດທະນາຈາກການປະຕິບັດງານທີ່ໄດ້ຮັບການສະໜັບສະໜູນຈາກ ເອດີບີ ໃນ ສປປ ລາວ, 2010-2015

| ຂະແໜງການ | ຜົນການດໍາເນີນງານທີ່ສໍາຄັນ |
|---|---|
| ການຂົນສົ່ງ | |
| ການນໍາໃຊ້ເສັ້ນທາງທີ່ໄດ້ຮັບການກໍ່ສ້າງ ຫຼື ຍົກລະດັບ (ສະເລ່ຍພາຫະນະ-ກິໂລແມັດໃນແຕ່ລະວັນໃນການດໍາເນີນງານໜຶ່ງປີເຕັມທໍາອິດ) | 796.079 |
| ເສັ້ນທາງໄດ້ຮັບການກໍ່ສ້າງ ຫຼື ຍົກລະດັບ (ກິໂລແມັດ) | 885 |
| ທາງດ່ວນ ແລະ ທາງຫຼວງແຫ່ງຊາດໄດ້ຮັບາການກໍ່ສ້າງ ຫຼື ຍົກລະດັບ (ກິໂລແມັດ) | 210 |
| ເສັ້ນທາງໃນແຂວງ, ເມືອງ, ແລະ ຊົນນະບົດທີ່ສ້າງຂຶ້ນ ຫຼື ຍົກລະດັບ (ກິໂລແມັດ) | 825 |
| ພະລັງງານ | |
| ຄົວເຮືອນໃໝ່ທີ່ເຊື່ອມຕໍ່ກັບໄຟຟ້າ (ຈໍານວນ) | 32.830 |
| ສາຍສົ່ງກະແສໄຟຟ້າທີ່ຕິດຕັ້ງ ຫຼື ຍົກລະດັບ (ກິໂລແມັດ) | 268 |
| ຕາຂ່າຍໄຟຟ້າທີ່ຕິດຕັ້ງ ຫຼື ຍົກລະດັບ (ກິໂລແມັດ) | 1.838 |
| ກະສິກໍາ ແລະ ຊັບພະຍາກອນທໍາມະຊາດ | |
| ລະບົບຊົນລະປະທານໄດ້ຮັບການຟື້ນຟູ ແລະ ໄດ້ຮັບການບໍາລຸງຮັກສາ (ຮຕ) | 11.138 |
| ສະມາຄົມຜູ້ໃຊ້ນໍ້າຖືກສ້າງຕັ້ງຂຶ້ນ (ຈໍານວນ) | 100 |
| ກຸ່ມຜະລິດຕະພັນສັດລ້ຽງໄດ້ຖືກສ້າງຕັ້ງຂຶ້ນ (ຈໍານວນ) | 1.600 |
| ກຸ່ມຊາວກະສິກອນຜູ້ຜະລິດຖືກສ້າງຕັ້ງຂຶ້ນ (ຈໍານວນ) | 1.013 |
| ທີ່ດິນໄດ້ຮັບການປັບປຸງຜ່ານການຄຸ້ມຄອງລະບົບຊົນລະປະທານ, ການລະບາຍນໍ້າ ແລະ/ຫຼື ການຄຸ້ມຄອງໄພນໍ້າຖ້ວມ (ຮຕ) | 11.655 |
| ນໍ້າໃຊ້ ແລະ ສຸຂະອະນາໄມ | |
| ບັນດາຄົວເຮືອນທີ່ມີການສະໜອງນໍ້າປະປາທີ່ສ້າງຂຶ້ນໃໝ່ ຫຼື ປັບປຸງ (ຈໍານວນ) | 23.631 |
| ບັນດາຄົວເຮືອນທີ່ມີສຸຂານາໄມທີ່ສ້າງຂຶ້ນໃໝ່ ຫຼື ປັບປຸງ (ຈໍານວນ) | 20.245 |
| ຕິດຕັ້ງທໍ່ສົ່ງນໍ້າ ຫຼື ຍົກລະດັບ (ຄວາມຍາວຂອງຕາໜ່າງເປັນກິໂລແມັດ) | 760 |
| ການສຶກສາ | |
| ນັກຮຽນໄດ້ຮັບຜົນປະໂຫຍດຈາກສະຖານທີ່ສຶກສາໃໝ່ ຫຼື ປັບປຸງ (ຈໍານວນ) | 112.560 |
| ນັກຮຽນທີ່ໄດ້ຮັບການສຶກສາ ຫຼື ຝຶກອົບຮົມພາຍໃຕ້ລະບົບການຮັບປະກັນຄຸນນະພາບທີ່ດີຂຶ້ນ (ຈໍານວນ) | 550.000 |
| ຄູສອນໄດ້ຮັບການຝຶກອົບຮົມທີ່ມີຄຸນນະພາບ ຫຼື ມີຄວາມສາມາດຕາມມາດຕະຖານ (ຈໍານວນ) | 40.487 |
| ການເງິນ | |
| ລູກຄ້າກູ້ຢືມຈາກການເງິນຈຸລະພາກ (ຈໍານວນ) | 61.490 |
| ລູກຄ້າກູ້ຢືມຈາກການເງິນຈຸລະພາກ (ເພດຍິງ,ຈໍານວນ) | 36.894 |

ຮຕ = ເຮັກຕາ, ກມ = ກິໂລແມັດ.

ແຫຼ່ງຂໍ້ມູນ: ຄາດຄະເນຂອງທະນາຄານ ເອດີບີ; ເອດີບີ. https://www.adb.org/countries/lao-pdr/results/data (ເຂົ້າເບິ່ງໃນວັນທີ 16 ກຸມພາ 2017).

# ການປະກອບສ່ວນຂອງ ເອດີບີ ເຂົ້າໃນການພັດທະນາ ເສດຖະກິດ ແລະ ສັງຄົມໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

> ໃນໄລຍະ 5 ທົດສະວັດທີ່ຜ່ານມາ, ການດຳເນີນງານຂອງ ເອດີບີ ໄດ້ສະໜັບສະໜູນການຍົກລະດັບໂຄງລ່າງພື້ນຖານທີ່ສຳຄັນ, ສິ່ງເສີມການບໍລິການດ້ານການສຶກສາ ແລະ ສາທາລະນະສຸກ, ການສ້າງຄວາມເຂັ້ມແຂງດ້ານການປົກຄອງບໍລິຫານ ແລະ ພາກສ່ວນເອກະຊົນ, ແລະ ຊ່ວຍສ້າງການເຊື່ອມໂຍງຫຼາຍຂຶ້ນກັບ

ໃນໄລຍະ 5 ທົດສະວັດຜ່ານມາ, ການດຳເນີນງານຂອງ ເອດີບີ ໄດ້ແກ້ໄຂບັນຫາທ້າທາຍຫຼາຍດ້ານທີ່ ສປປ ລາວປະເຊີນຢູ່ ຫຼັງຟື້ນຈາກໄລຍະເວລາທີ່ຍາວນານໃນອາດີດທີ່ຜ່ານມາທີ່ໄດ້ມີຂໍ້ຂັດແຍ່ງ ແລະ ຖືກໂດດດ່ຽວ. ການຊ່ວຍເຫຼືອເບື້ອງຕົ້ນ ແມ່ນມີເປົ້າໝາຍສ້າງຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ຕອບສະໜອງຄວາມຕ້ອງການອັນຈຳເປັນຂອງຂະແໜງກະສິກຳຂອງ ສປປ ລາວ; ຈາກນັ້ນ, ກໍແມ່ນການສະໜັບສະໜູນໃນການກໍ່ສ້າງເສັ້ນທາງ ແລະ ຍົກລະດັບການຂົນສົ່ງ ໃນຊຸມປີ 1990; ແລະ ຫຼັງຈາກນັ້ນ ກໍແມ່ນການຊ່ວຍເຫຼືອດ້ານການສຶກສາ, ສາທາ, ພະລັງງານ, ແລະ ການເຊື່ອມໂຍງເສດຖະກິດກັບພາກພື້ນໃນຊຸມປີ 2000.

ການດຳເນີນງານຂອງ ເອດີບີ ໄດ້ສະໜັບສະໜູນການປັບປຸງຊົນລະປະທານ, ເຊິ່ງເຮັດໃຫ້ລາວສາມາດຜະລິດເຂົ້າກິນກຸ້ມຕົນເອງ; ການກໍ່ສ້າງ ຫຼື ການປັບປຸງສ້ອມແປງເສັ້ນທາງຫຼາຍພັນກິໂລແມັດ, ລວມທັງ ເສັ້ນທາງທີ່ແລ່ນຜ່ານແລວເສດຖະກິດລະຫວ່າງປະເທດ; ການກໍ່ສ້າງ ແລະ ຍົກລະດັບຂະແໜງໄຟຟ້າ, ນ້ຳປະປາ, ແລະ ໂຄງລ່າງພື້ນຖານດ້ານສຸຂະອານາໄມສຳລັບຫຼາຍສິບພັນຄົວເຮືອນ; ການສ້າງຄວາມເຂັ້ມແຂງດ້ານການບໍລິການການສຶກສານັບແຕ່ຂັ້ນປະຖົມຂຶ້ນໄປ; ແລະ ການປັບປຸງທີ່ສຳຄັນຕົ້ນຕໍໃນການບໍລິການສາທາລະນະສຸກໃນເຂດຫ່າງໄກສອກຫຼີກ. ເອດີບີ ຍັງໄດ້ຊ່ວຍສ້າງຄວາມເຂັ້ມແຂງດ້ານການປົກຄອງບໍລິຫານພາກລັດ ແລະ ພາກເອກະຊົນ, ປັບປຸງການຄຸ້ມຄອງຊັບພະຍາກອນນ້ຳ, ແລະ ສ້າງການເຊື່ອມໂຍງ ແລະ ການຮ່ວມມືດ້ວຍການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການຂົນສົ່ງລະຫວ່າງປະເທດ.

# ການຮ່ວມມື ແລະ ເຊື່ອມໂຍງກັບພາກພື້ນ - ການຊ່ວຍເຫຼືອຂ້າມພົມແດນ

ການລິເລີ່ມແຜນງານຮ່ວມມືດ້ານເສດຖະກິດອະນຸພາກພື້ນແມ່ນ້ຳຂອງ (GMS) ໃນປີ 1992 ສະແດງໃຫ້ເຫັນເຖິງການຊຸກຍູ້ຮ່ວມມືກັນໃນພາກພື້ນ ທີ່ເພີ່ມຂຶ້ນລະຫວ່າງບັນດາປະເທດເຂດແມ່ນ້ຳຂອງຄື: ກຳປູເຈຍ, ສປປ ລາວ, ມຽນມາ, ໄທ, ຫວຽດນາມ ແລະ ແຂວງຢູນນານ ແລະ ເຂດປົກຄອງຕົນເອງກວາງຊີໃນ ສປ ຈີນ. ເອດີບີ ໄດ້ກາຍເປັນຜູ້ຊ່ວຍເຫຼືອທີ່ສຳຄັນຍິ່ງທາງດ້ານການເງິນ ແລະ ທັງສິ່ງເສີມແຜນງານນີ້.

ນັບແຕ່ທ້າຍຊຸມປີ 1990, ເອດີບີ ໄດ້ໃຫ້ທຶນຊ່ວຍເຫຼືອມູນຄ່າຫຼາຍກວ່າ 341 ລ້ານໂດລາສະຫະລັດ (ໃນມູນຄ່າທັງໝົດ 694 ລ້ານໂດລາສະຫະລັດ) ສຳລັບ 24 ໂຄງການຂອງແຜນງານ GMS ທີ່ກ່ຽວຂ້ອງກັບການພັດທະນາແລວເສດຖະກິດ, ການຜະລິດໄຟຟ້າພະລັງນ້ຳ, ການທ່ອງທ່ຽວ, ການອຳນວຍຄວາມສະດວກ ທາງດ້ານການຄ້າ, ການພັດທະນາຕົວເມືອງຕາມແລວເສດຖະກິດ, ການຄຸ້ມຄອງຄວາມສ່ຽງຈາກໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ, ການຄວບຄຸມພະຍາດລະບາດ ແລະ ການອະນຸລັກຊີວະນານາພັນ.

> ໃນຖານະເປັນປະເທດດຽວທີ່ມີຊາຍແດນຕິດກັບບັນດາປະເທດສະມາຊິກອື່ນໆຂອງ GMS ແລະ ເປັນພຽງປະເທດດຽວທີ່ສາມແລວເສດຖະກິດພາກພື້ນຕັດຜ່ານ, ສປປ ລາວ ແມ່ນມີທີ່ຕັ້ງທີ່ເໝາະສົມທີ່ຈະໄດ້ຮັບຜົນປະໂຫຍດຈາກການເພີ່ມຂຶ້ນຂອງການຄ້າຜ່ານແດນ, ການທ່ອງທ່ຽວ ແລະ ການລົງທຶນ.

ສປປ ລາວ ເປັນປະເທດດຽວທີ່ມີຊາຍແດນຕິດກັບບັນດາປະເທດສະມາຊິກອື່ນໆຂອງ GMS ແລະ ເປັນພຽງປະເທດດຽວເທົ່ານັ້ນທີ່ທັງສາມແລວເສດຖະກິດພາກພື້ນຕັດຜ່ານ (ແລວເສດຖະກິດເໜືອ-ໃຕ້, ແລວເສດຖະກິດຕາເວັນອອກ-ຕາເວັນຕົກ ແລະ ແລວເສດຖະກິດພາກໃຕ້), ສປປ ລາວ ມີຄວາມອາດສາມາດສູງໃນການ ເຮັດບົດບາດສຳຄັນໃນຂະແໜງການຄ້າຕົ້ນຕໍທັງໃນເຂດພາກພື້ນແມ່ນ້ຳຂອງ ແລະ ໃນພາກພື້ນປະຊາຄົມເສດຖະກິດອາຊຽນ. ພ້ອມນັ້ນ, ຢູ່ໃນຈຸດຕຳແໜ່ງທີ່ເໝາະສົມທີ່ຈະໄດ້ຮັບຜົນປະໂຫຍດຈາກປະຊາຄົມເສດຖະກິດອາຊຽນທີ່ສ້າງຕັ້ງຂຶ້ນໃນເດືອນ ທັນວາ 2015.

ໃນຂະແໜງການຂົນສົ່ງ, ໂຄງການການປັບປຸງຕາໜ່າງການຂົນສົ່ງທາງພາກເໜືອ GMS ຄັ້ງທີໜຶ່ງ (ອະນຸມັດໃນປີ 2007 ແລະ ສຳເລັດໃນປີ 2016), ແລະ ໂຄງການ ການປັບປຸງຕາໜ່າງການຂົນສົ່ງທາງພາກເໜືອ GMS ຄັ້ງທີສອງ (ອະນຸມັດໃນປີ 2010) ໂດຍມີເງິນກູ້ຢືມທັງໝົດ 88,5 ລ້ານໂດລາສະຫະລັດ, ຊຶ່ງສະໜັບສະໜູນການຍົກລະດັບ ເສັ້ນທາງຫຼວງແຫ່ງຊາດເຊື່ອມຕໍ່ກັບຕົວເມືອງທາງພາກເໜືອຂອງແຂວງຫຼວງພະບາງກັບຊາຍແດນປະເທດໄທ. ການຍົກລະດັບ, ສຳເລັດໃນປີ 2014 ແມ່ນສິ່ງຜົນປະໂຫຍດຢ່າງຫຼວງຫຼາຍ, ຊຶ່ງເວລາທີ່ໃຊ້ໃນການເດີນທາງແມ່ນຫຼຸດລົງເຄິ່ງໜຶ່ງ, ຄ່າຂົນສົ່ງ ກໍຫຼຸດລົງ, ແລະ ຍັງເປີດໂອກາດໃໝ່ໃນການດຳລົງຊີວິດສຳລັບຊຸມຊົນທີ່ທຸກຍາກທີ່ອາໄສຢູ່ຕາມເສັ້ນທາງດັ່ງກ່າວ.

ເຖິງຢ່າງໃດກໍຕາມ, ການເພີ່ມຂຶ້ນຂອງຈຳນວນນັກທ່ອງທ່ຽວ ເປັນໂອກາດດີໃຫ້ແກ່ຫລາຍພາກສ່ວນ ໂດຍທີ່ຫຼາຍປະເທດຈະສູ້ຊົນ ເພື່ອຮັບປະກັນໃຫ້ຜົນປະໂຫຍດຈາກການທ່ອງທ່ຽວແຜ່ຂະຫຍາຍໄປຍັງບັນດາຊຸມຊົນໃນທ້ອງຖິ່ນ, ແລະ ສິ່ງດຶງດູດນັກທ່ອງທ່ຽວຕ່າງໆ—ທັງທາງດ້ານທຳມະຊາດ ແລະ ສິ່ງທີ່ຄົນສ້າງຂຶ້ນໄດ້ຮັບການຄຸ້ມຄອງຢ່າງຍືນຍົງ.

ໂຄງການພັດທະນາການທ່ອງທ່ຽວແບບຍືນຍົງອະນຸພາກພື້ນແມ່ນ້ຳຂອງ (ອະນຸມັດໃນປີ 2002 ແລະ ສຳເລັດແລ້ວໃນປີ 2008), ເຊິ່ງມີເງິນກູ້ຢືມ ເອດີບີ ທຽບເທົ່າ 10 ລ້ານໂດລາສະຫະລັດ ສຳລັບສ່ວນຂອງ ສປປ ລາວ, ຊຶ່ງມີເປົ້າໝາຍສະໜັບສະໜູນການທ່ອງທ່ຽວທີ່ຊຸມຊົນມີສ່ວນຮ່ວມ ເພື່ອແກ້ໄຂຄວາມທຸກຍາກໃນສາມແຂວງພາກໃຕ້, ພ້ອມກັບມາດຕະການເພື່ອປັບປຸງສິ່ງແວດລ້ອມ ແລະ ປັບປຸງສະຖານທີ່ທ່ອງທ່ຽວວັດທະນະທຳໃນສະຖານທີ່ສຳຄັນ, ລວມທັງເຂດເກາະດອນ ສີພັນດອນທີ່ມີຊື່ສຽງ. ນັບແຕ່ມີການເລີ່ມຕົ້ນໂຄງການ, ກໍໄດ້ສ້າງໂອກາດດ້ານເສດຖະກິດຢ່າງຫຼວງຫຼາຍທີ່ຕິດພັນກັບການທ່ອງທ່ຽວໃຫ້ປະມານ 38.000 ຄົນ ລວມທັງ ແມ່ຍິງ. ໂຄງການນີ້ ໄດ້ສົ່ງຜົນໃຫ້ການທ່ອງທ່ຽວເພີ່ມຂຶ້ນໂດຍສະເລ່ຍ 108% ແລະ ການໃຊ້ຈ່າຍຂອງນັກທ່ອງທ່ຽວໃນເຂດໂຄງການເພີ່ມຂຶ້ນ 26%.

ຢູ່ບ້ານຫາງຄອນ ຊຶ່ງຕັ້ງຢູ່ດອນໂຂງ ໃນເຂດສີ່ພັນດອນ, ບ່ອນທີ່ນັກທ່ອງທ່ຽວມາເບິ່ງປາໂລມານ້ຳຈືດ ອີຣາວາດີ ທີ່ຫາເບິ່ງໄດ້ຍາກ, ທ່ານ ຄຳກິ່ງ ແກ້ວມະນີ ອາຍຸ 39 ປີ ກ່າວວ່າ ທຸລະກິດໃຫ້ບ່ອນພັກຢູ່ເຮືອນຂອງລາວ ໄດ້ຮັບການກະຕຸກຊຸກຍູ້ຢ່າງຫຼວງຫຼາຍຈາກໂຄງການ.

ລາວເວົ້າວ່າ “ການຝຶກອົບຮົມ ແລະ ການປະກອບວັດສະດຸອຸປະກອນແລະເຄື່ອງຂອງຕ່າງໆພາຍໃຕ້ໂຄງການ ແລະ ການປັບປຸງເສັ້ນທາງເຂົ້າເຖິງບ້ານແມ່ນເຮັດໃຫ້ເກີດມີຄວາມແຕກຕ່າງຢ່າງໃຫຍ່ຫຼວງໃຫ້ແກ່ທຸລະກິດຂອງຂ້ອຍ, ແລະ ຂ້ອຍໄດ້ຮຽນຮູ້ຫຼາຍຢ່າງກ່ຽວກັບວິທີການຕອບສະໜອງຕາມມາດຕະຖານທີ່ຈຳເປັນ ເພື່ອຮອງຮັບແຂກຕ່າງປະເທດ, ລວມທັງ ໄດ້ຮຽນກ່ຽວກັບຄວາມຕ້ອງການອາຫານປະເພດຕ່າງໆຂອງນັກທ່ອງທ່ຽວອີກດ້ວຍ” ລາວເວົ້າຕື່ມອີກວ່າ. “ໃນເວລາທີ່ຂ້ອຍເຮັດແຕ່ນາ, ຂ້ອຍສ້າງລາຍໄດ້ປະມານ 5 ລ້ານກີບ (608 ໂດລາສະຫະລັດ) ຕໍ່ປີ, ແຕ່ໃນຂະນະທີ່ການເຮັດທຸລະກິດກ່ຽວກັບການບໍລິການທີ່ພັກອາໄສຂອງຂ້ອຍເຕີບໂຕ, ຂ້ອຍສາມາດມີລາຍຮັບເພີ່ມເປັນສອງເທົ່າ ແລະ ນີ້ໄດ້ຊ່ວຍໃຫ້ຂ້ອຍສາມາດຂະຫຍາຍທຸລະກິດການໃຫ້ບໍລິການເຮືອ ແລະ ຕັ້ງຮ້ານຂາຍເຄື່ອງຍ່ອຍໄດ້.”

ໃນຂົງເຂດອື່ນໃນ ສປປ ລາວ, ໂຄງການ GMS ຂອງ ເອດີບີ ໄດ້ຊ່ວຍຫຼຸດຜ່ອນຄວາມສ່ຽງຈາກໄພນ້ຳຖ້ວມ ແລະໄພແຫ້ງແລ້ງຢູ່ຕາມລຳແມ່ນ້ຳຂອງ, ຊ່ວຍສະໜັບສະໜູນດ້ານການຄ້າໃຫ້ມີຄວາມຄ່ອງຕົວ ໂດຍການເຮັດໃຫ້ຂັ້ນຕອນການກວດກາ “ປະຕູດຽວ” ທີ່ງ່າຍດາຍຢູ່ຕາມດ່ານຊາຍແດນ, ປັບປຸງການປ້ອງກັນພະຍາດຕິດຕໍ່, ສ້າງຄວາມເຂັ້ມແຂງໃນດ້ານການອະນຸລັກຊີວະນານາພັນ, ແລະ ການສ້າງພື້ນຖານສຳລັບ ໂຄງລ່າງເຊື່ອມຕໍ່ພະລັງງານໃນພາກພື້ນ ເພື່ອສະໜັບສະໜູນການຄ້າພະລັງງານຂ້າມຊາຍແດນ.



ທ່ານ ຄຳກິ່ງ ແກ້ວມະນີ ເປັນຜູ້ໃຫ້ບໍລິການເຮືອນພັກໃນເຂດດອນຄອນ, ຊຶ່ງເປັນສະຖານທີ່ໜຶ່ງທີ່ມີຊື່ສຽງສຳລັບນັກທ່ອງທ່ຽວທີ່ມາຢ້ຽມຢາມເຂດສີ່ພັນດອນ ຕາມລຳແມ່ນ້ຳຂອງໃນແຂວງຈຳປາສັກ. ທຸລະກິດລາວໄດ້ພັດທະນາຂຶ້ນນັບຕັ້ງແຕ່ລາວໄດ້ຮັບການຝຶກອົບຮົມໃນການບໍລິການການທ່ອງທ່ຽວພາຍໃຕ້ໂຄງການພັດທະນາການທ່ອງທ່ຽວແບບຍືນຍົງໃນພາກພື້ນ GMS ຂອງ ເອດີບີ.

# ພະລັງງານ—ການສະໜອງໄຟຟ້າພາຍໃນ ແລະ ຕ່າງປະເທດ

ເອດີບີ ໄດ້ສະໜັບສະໜູນການພັດທະນາພະລັງງານຂອງ ສປປ ລາວໃນສອງຂົງເຂດທີ່ສຳຄັນ—ການກໍ່ສ້າງ ແລະ ຍົກລະດັບໂຄງລ່າງພື້ນຖານສາຍສົ່ງ ແລະ ຕາຂ່າຍແຈກຈ່າຍໄຟຟ້າ, ແລະ ໃຫ້ການຊ່ວຍເຫຼືອເພື່ອກໍ່ສ້າງ ແລະ ຂະຫຍາຍເຂື່ອນໄຟຟ້າທີ່ໄດ້ຕາມມາດຕະຖານການປົກປ້ອງສິ່ງແວດລ້ອມ ແລະ ສັງຄົມທີ່ໄດ້ຮັບການຍອມຮັບໃນລະດັບສາກົນ.

ການສະໜັບສະໜູນຂອງ ເອດີບີ ເລີ່ມຕົ້ນໃນຊຸມປີ 1970 ດ້ວຍການຊ່ວຍເຫຼືອໃນດ້ານການສ້າງຕາຂ່າຍແຈກຈ່າຍໄຟຟ້າໃນເຂດນະຄອນຫຼວງວຽງຈັນ. ໃນຊຸມປີ 1980, ໄດ້ສະໜອງການຊ່ວຍເຫຼືອຂະແໜງການໄຟຟ້າໃນຊົນນະບົດ, ແລະ ນັບແຕ່ນັ້ນ, ກໍໄດ້ສືບຕໍ່ສະໜັບສະໜູນປັບປຸງການສົ່ງ ແລະ ການແຈກຈ່າຍກະແສໄຟຟ້າ ແລະ ພ້ອມທັງສະໜອງທຶນສຳລັບການພັດທະນາເຂື່ອນໄຟຟ້າພະລັງນໍ້າໂດຍຄຳນຶງເຖິງການປົກປ້ອງສິ່ງແວດລ້ອມ ແລະ ສັງຄົມຢ່າງເຂັ້ມງວດ.

ນັບແຕ່ປີ 1970-2011, ຂະແໜງພະລັງງານ ແມ່ນໄດ້ຮັບທຶນກູ້ຢືມທີ່ຫຼາຍສຸດເປັນອັນດັບສອງຊຶ່ງມີມູນຄ່າຫຼາຍກວ່າ 273 ລ້ານໂດລາສະຫະລັດ, ຫຼື 23% ຂອງຂະແໜງການທັງໝົດ. ໃນໄລຍະແຕ່ປີ 2011-2015, ການດຳເນີນງານຂອງ ເອດີບີ ໄດ້ຊ່ວຍເຫຼືອປະມານ 33.000 ຄົວເຮືອນໃຫ້ເຂົ້າເຖິງການນຳໃຊ້ໄຟຟ້າພ້ອມກັນນັ້ນກໍ່ໄດ້ຕິດຕັ້ງຫຼືປັບປຸງທັງສາຍສົ່ງກະແສໄຟຟ້າຫຼາຍກວ່າ 1.800 ກິໂລແມັດ ແລະ ຕິດຕັ້ງ ແລະ ປັບປຸງ ຕາຂ່າຍແຈກຈ່າຍໄຟຟ້າໄດ້ຫຼາຍກວ່າ 260 ກິໂລແມັດ. ວຽກນີ້ ລວມມີ ການຍົກລະດັບພື້ນຖານໂຄງລ່າງ ສາຍສົ່ງໄຟຟ້າ ແລະ ຕາຂ່າຍໄຟຟ້າ ທີ່ສຳຄັນໃນເຂດຊົນນະບົດທີ່ທຸກຍາກ ແລະ ຫ່າງໄກສອກຫຼີກ ໂດຍສະເພາະໃນເຂດພາກເໜືອຂອງ ສປປ ລາວ. ອັດຕາການຊົມໃຊ້ໄຟຟ້າຂອງຄົວເຮືອນແມ່ນ 81% ໃນປີ 2015, ຊຶ່ງ ຫຼຸດເລັກໜ້ອຍຈາກ ເປົ້າໝາຍຂອງລັດຖະບານຊຶ່ງວາງໄວ້ທີ່ 90% ພາຍໃນປີ 2020.

ການສະໜັບສະໜູນຂອງ ເອດີບີ ສຳລັບການພັດທະນາເຂື່ອນໄຟຟ້າພະລັງນໍ້າ ປະກອບມີໂຄງການເຂື່ອນໄຟຟ້ານໍ້າເທີນ 2, ຊຶ່ງເປັນໂຄງການເຂື່ອນໄຟຟ້າພະລັງນໍ້າທີ່ໃຫຍ່ທີ່ສຸດຂອງປະເທດ ແລະ ໂຄງການເຂື່ອນໄຟຟ້ານໍ້າງຽບ 1 ທີ່ ເອດີບີ ໄດ້ສະໜັບສະໜູນໂດຍຜ່ານຮູບແບບການຮ່ວມທຶນລະຫວ່າງພາກລັດ ແລະ ເອກະຊົນ. ໂຄງການໄຟຟ້າທັງສອງຈະສ້າງລາຍຮັບຢ່າງຫຼວງຫຼາຍໃຫ້ແກ່ລັດຖະບານໂດຍການຂາຍໄຟຟ້າຂ້າມຊາຍແດນເຊິ່ງລາຍຮັບດັ່ງກ່າວຈະໄດ້ນຳໃຊ້ເພື່ອສະໜັບສະໜູນບັນດາໂຄງການສາທາລະນະສຸກ, ການສຶກສາ ແລະ ການຫຼຸດຜ່ອນຄວາມທຸກຍາກຕ່າງໆຂອງລັດຖະບານ.

# ຂະແໜງກະສິກຳ ແລະ ຊັບພະຍາກອນທຳມະຊາດ—ຈາກການເຮັດກະສິກຳກຸ້ມຕົນເອງໄປສູ່ທຸລະກິດກະສິກຳ

ຂະແໜງກະສິກຳຍັງເປັນເສັ້ນເລືອດໃຫຍ່ຂອງປະເທດ, ຊຶ່ງມີຄົວເຮືອນຫຼາຍກ່ວາເຄິ່ງໜຶ່ງຂອງຄົວເຮືອນທັງໝົດ, ຕົ້ນຕໍ ຫຼື ສ່ວນໜຶ່ງ ຍັງຄົງເຮັດການກະສິກຳປູກຝັງເປັນຕົ້ນຕໍຫຼືສຳຮອງ. ການຊ່ວຍເຫຼືອຂະແໜງການນີ້ໃນເບື້ອງຕົ້ນຂອງ ເອດີບີ ແມ່ນໃນຊຸມປີ 1970 ໂດຍມີເປົ້າໝາຍໃສ່ການສ້າງລະບົບຊົນລະປະທານ ແລະ ໂຄງລ່າງພື້ນຖານຊົນນະບົດອື່ນໆທີ່ຈຳເປັນເພື່ອເພີ່ມຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ເພື່ອຊ່ວຍໃຫ້ບັນລຸເປົ້າໝາຍຂອງການຜະລິດເຂົ້າກຸ້ມຕົນເອງຂອງປະເທດ. ໃນຊຸມປີມໍ່ໆມານີ້, ການຊ່ວຍເຫຼືອໃນຂະແໜງການດັ່ງກ່າວ ໄດ້ຊ່ວຍເຫຼືອຊາວກະສິກອນໃຫ້ຫັນຈາກການເຮັດກະສິກຳທີ່ຖາງປ່າເຮັດໄຮ່ແບບເລື່ອນລອຍ ແລະ ບໍ່ມີປະສິດທິຜົນ ມາເຮັດກະສິກຳທີ່ມີຜົນຜະລິດຫຼາຍຂຶ້ນ, ມີຄວາມຫຼາກຫຼາຍ ແລະ ເຮັດກິດຈະກຳກະສິກຳຕາມທິດຍືນຍົງ, ຊຶ່ງສາມາດຊ່ວຍສ້າງລາຍໄດ້ເພີ່ມຂຶ້ນ ແລະ ພ້ອມທັງອະນຸລັກຮັກສາຊັບພະຍາກອນທຳມະຊາດ.

ໂຄງການສົ່ງເສີມການຜະລິດກະສິກຳເພື່ອເປັນສິນຄ້າ (ອະນຸມັດໃນປີ 2002 ແລະສຳເລັດໃນປີ 2015 ດ້ວຍທຶນຊ່ວຍເຫຼືອລ້າຂອງ ເອດີບີ ທັງໝົດມູນຄ່າ 17 ລ້ານໂດລາສະຫະລັດ) ແລະໂຄງການສົ່ງເສີມການຜະລິດກະສິກຳແລະປ່າໄມ້ແບບຍືນຍົງ (ອະນຸມັດໃນປີ 2009 ແລະ ສຳເລັດໃນປີ 2016 ດ້ວຍທຶນຊ່ວຍເຫຼືອລ້າຂອງ ເອດີບີ ມູນຄ່າ 20 ລ້ານໂດລາສະຫະລັດ ແລະ ເງິນຊ່ວຍເຫຼືອລ້າຈາກ IFAD ມູນຄ່າ 15 ລ້ານໂດລາສະຫະລັດ), ເພື່ອຊ່ວຍໃຫ້ຊາວກະສິກອນທີ່ທຸກຍາກຈຳນວນຫຼາຍພັນຄົນສາມາດສ້າງທຸລະກິດກະສິກຳຂະໜາດນ້ອຍ, ນັບຈາກການປູກເຂົ້າ ແລະ ພືດກະສິກຳທີ່ເປັນສິນຄ້າຈົນເຖິງການລ້ຽງສັດ. ໂຄງການດັ່ງກ່າວ ຍັງໄດ້ສະໜອງການຖ່າຍທອດເຕັກໂນໂລຊີ ແລະ ໂຄງລ່າງພື້ນຖານ, ລວມທັງການກໍ່ສ້າງແລະປັບປຸງ ເສັ້ນທາງຈາກແຫຼ່ງຜະລິດຮອດຕະຫຼາດ.

ອົງປະກອບສຳຄັນຂອງການສະໜັບສະໜູນຂອງ ເອດີບີ ໃນຂະແໜງກະສິກຳ ແມ່ນຜົນສຳເລັດໃນການສ້າງຕັ້ງກຸ່ມຊາວກະສິກອນ, ຊຶ່ງເປັນຜູ້ທີ່ໄດ້ຮຽນຮູ້ວິທີການຈັດການດ້ານການເງິນ; ການຂາຍສິນຄ້າຂອງພວກເຂົາສູ່ຕະຫຼາດ; ແລະ ສິ່ງສຳຄັນແມ່ນການເຈລະຈາລາຄາແບບລວມໝູ່ ເພື່ອໃຫ້ໄດ້ລາຄາທີ່ດີກວ່າສຳລັບຜົນຜະລິດຂອງພວກເຂົາ.

ທ່ານທັນສະໃໝ ເພັດສົງຄາມເວົ້າວ່າ “ຜົນປະໂຫຍດທີ່ແທ້ຈິງຂອງໂຄງການສົ່ງເສີມການຜະລິດກະສິກຳເພື່ອເປັນສິນຄ້ານີ້ແມ່ນການຈັດຕັ້ງກຸ່ມຊາວກະສິກອນ, ໃນປະຈຸບັນພວກເຮົາເວົ້າເປັນສຽງດຽວກັນ, ເມື່ອກ່ອນພວກເຮົາເປັນຊາວກະສິກອນເວົ້າໃຜເວົ້າມັນ ຊຶ່ງບໍ່ມີອຳນາດໃນການຕໍ່ລອງ ແລະ ອາດເສຍຜົນປະໂຫຍດ”, ທ່ານ ທັນສະໃໝ ເປັນຫົວໜ້າກຸ່ມຊາວກະສິກອນໃນບ້ານທົ່ງຄູນ ເມືອງປາກເຊ, ແຂວງຈຳປາສັກ, ຊຶ່ງເປັນຜູ້ຜະລິດກະລໍ່າປີທີ່ມີຄຸນນະພາບສູງຂາຍພາຍໃນທ້ອງຖິ່ນ ແລະ ຂາຍໃຫ້ແກ່ຜູ້ຮັບຊື້ຈາກໄທ.



ຊາວກະສິກອນທີ່ໄດ້ຮັບຜົນປະໂຫຍດຈາກໂຄງການ ສົ່ງເສີມການຜະລິດກະສິກຳ ແລະ ປ່າໄມ້ແບບຍືນຍົງ ພວມເກັບກ່ຽວມັນຕົ້ນສົດໆທີ່ຝານໃໝ່ໆ.

## ຊັບພະຍາກອນທຳມະຊາດ ແລະ ການປ່ຽນແປງດິນຟ້າອາກາດ—ການສ້າງເງື່ອນໄຂໃນການຮັບມືກັບການປ່ຽນແປງສະພາບອາກາດ

ສປປ ລາວທີ່ມີຄວາມຮັ່ງມີທາງດ້ານຊັບພະຍາກອນທຳມະຊາດ ແລະ ຊີວະນານາພັນ, ແຕ່ຊັບພະຍາກອນເຫຼົ່ານັ້ນກຳລັງຕົກຢູ່ພາຍໃຕ້ຄວາມກົດດັນທີ່ເພີ່ມຂຶ້ນຈາກໄພຂົ່ມຂູ່ຕ່າງໆ ລວມທັງ ການລ່ວງລ້ຳນຳໃຊ້ທີ່ດິນ (ຈາກການຂະຫຍາຍໂຕຂອງພົນລະເມືອງ ແລະ ການຂະຫຍາຍໂຕເມືອງ), ການພັດທະນາໂຄງລ່າງພື້ນຖານ, ການຂະຫຍາຍການເຮັດກະສິກຳປູກຝັງ, ການຫຼຸດລົງຂອງແຫຼ່ງນ້ຳທີ່ມີຄຸນນະພາບດີ, ການຄຸ້ມຄອງປ່າໄມ້ທີ່ບໍ່ມີປະສິດທິຜົນ, ການຂຸດຄົ້ນບໍ່ແຮ່ ແລະ ການກຳຈັດຂີ້ເຫຍື້ອຍັງບໍ່ດີເທົ່າທີ່ຄວນ.

ໄພຂົ່ມຂູ່ທີ່ເພີ່ມຂຶ້ນອີກ ແມ່ນການປ່ຽນແປງສະພາບອາກາດ, ສປປ ລາວເປັນໜຶ່ງໃນບັນດາປະເທດທີ່ມີຄວາມຄວາມສ່ຽງໃນອາຊີ ເນື່ອງຈາກ ມີການເພິ່ງພາຊັບພະຍາກອນທຳມະຊາດຫຼາຍ ຊຶ່ງໄດ້ຮັບຜົນກະທົບຈາກການປ່ຽນແປງຂອງສະພາບອາກາດ ແລະ ມີຂີດຄວາມສາມາດໃນການປັບຕົວຕ່ຳ.

ເອດີບີ ໄດ້ສະໜັບສະໜູນແຜນຍຸດທະສາດຂອງລັດຖະບານເພື່ອປົກຮັກສາຊັບພະຍາກອນທຳມະຊາດ ແລະ ສ້າງຄວາມເຂັ້ມແຂງໃນດ້ານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໂດຍຜ່ານຫຼາຍໂຄງການ, ລວມທັງໂຄງການແລວອະນຸລັກຊີວະນາໆພັນໃນອະນຸພາກພື້ນແມ່ນ້ຳຂອງ ທີ່ພວມໄດ້ຮັບການຈັດຕັ້ງປະຕິບັດ (ອະນຸມັດໃນປີ 2010), ແລະ ໂຄງການຄຸ້ມຄອງຄວາມສ່ຽງໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ ໃນອະນຸພາກພື້ນແມ່ນ້ຳຂອງ (ອະນຸມັດໃນປີ 2012) ຊຶ່ງໄດ້ລວມເອົາບັນດາມາດຕະການການປັບຕົວເຂົ້າກັບການປ່ຽນແປງສະພາບດິນຟ້າອາກາດ ເພື່ອຫຼຸດຜ່ອນຜົນກະທົບທີ່ຮຸນແຮງຈາກການປ່ຽນແປງຂອງດິນຟ້າອາກາດ.

ເອດີບີ ໄດ້ເພີ່ມໂຄງການຊ່ວຍເຫຼືອ ເພື່ອປົກປ້ອງແຫຼ່ງຕົ້ນນ້ຳ ໂດຍຜ່ານໂຄງການພັດທະນາອ່າງນ້ຳງື່ມ (ສຳເລັດໃນປີ 2011 ດ້ວຍເງິນທຶນກູ້ຢືມຈາກ ເອດີບີ ມູນຄ່າ 20 ລ້ານໂດລາສະຫະລັດ), ເຊິ່ງໄດ້ພັດທະນາ ແຜນການຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານ ຊຶ່ງ ສ້າງຄວາມພໍໃຈໃຫ້ແກ່ຜູ້ຜະລິດໄຟຟ້ານ້ຳງື່ມ 1 ແລະ ບັນດາຊຸມຊົນທີ່ອາໄສຢູ່ໃນເຂດອ່າງນ້ຳງື່ມ ຊຶ່ງເປັນຜູ້ທີ່ເພິ່ງພາອາໄສແຫຼ່ງນ້ຳເພື່ອຮັບໃຊ້ໃນຊີວິດປະຈຳວັນຂອງພວກເຂົາ. ແຜນການດັ່ງກ່າວ ໄດ້ສ້າງແບບແຜນທີ່ສາມາດປະຕິບັດໄດ້ ສຳລັບການຄຸ້ມຄອງຊັບພະຍາກອນນ້ຳໃນອ່າງເກັບນ້ຳຕາມສາຍນ້ຳຕ່າງໆໃນທົ່ວປະເທດ. ໂຄງການດັ່ງກ່າວຍັງໄດ້ສະໜັບສະໜູນການຫັນປ່ຽນໄປສູ່ການເຮັດກະສິກຳແບບຍືນຍົງ ແລະ ການຮັບເອົາແບບແຜນການດຳລົງຊີວິດແບບໃໝ່, ເຊິ່ງລວມທັງການຕ່ຳຫູກ.

ການຊ່ວຍເຫຼືອທີ່ກຳລັງດຳເນີນຢູ່ຂອງ ເອດີບີ ສຳລັບການຍົກລະດັບລະບົບຊົນລະປະທານ ເຊິ່ງແມ່ນການເພີ່ມຜົນຕອບແທນດ້ານເສດຖະກິດ ແລະ ລາຍຮັບຂອງຊາວກະສິກອນ, ໃນຂະນະດຽວກັນກໍ່ສະໜັບສະໜູນການນຳໃຊ້ວິທີການປູກຝັງທີ່ທັນສະໄໝ ແລະ ຍືນຍົງເພື່ອຊ່ວຍພວກເຂົາໃນການຫັນຈາກການຜະລິດເພື່ອກຸ້ມຕົນເອງມາເປັນການຜະລິດເພື່ອເປັນສິນຄ້າ.



ສະມາຊິກຂອງກຸ່ມຕໍ່າຫູກ ທີ່ໄດ້ຮັບການຊ່ວຍເຫຼືອ ດ້ານຊີວິດການເປັນຢູ່ ພາຍໃຕ້ໂຄງການການ ພັດທະນາອ່າງນໍ້າງື່ມ.

# ການສະໜອງນໍ້າປະປາແລະສຸຂະພິບານ—ການປ່ຽນແປງຮູບໂສມຂອງຕົວເມືອງ

ເອດີບີ ເປັນຄູ່ຮ່ວມພັດທະນາໜຶ່ງທີ່ນໍາໜ້າຂອງລັດຖະບານໃນຂະແໜງການສະໜອງນໍ້າໃຊ້ ແລະ ສຸຂະອານາໄມ. ນັບແຕ່ປີ 2004-2015, ເອດີບີ ໄດ້ຊ່ວຍ ຫຼາຍກວ່າ 38.400 ຄົວເຮືອນ ມີນໍ້າປະປາເພື່ອຊົມໃຊ້ ແລະ ເກືອບປະມານ 40.000 ຄົວເຮືອນ ມີສິ່ງອໍານວຍຄວາມສະດວກດ້ານສຸຂະອານາໄມໃໝ່ ຫຼື ໄດ້ຮັບການປັບປຸງໃໝ່.

ເລີ່ມຕົ້ນດ້ວຍການສະໜອງນໍ້າປະປາ ແລະ ປັບປຸງໂຄງລ່າງພື້ນຖານໃນການແຈກຈ່າຍນໍ້າປະປາໃນປີ 1974, ເອດີບີ ໄດ້ກາຍເປັນໜຶ່ງໃນບັນດາຄູ່ຮ່ວມພັດທະນາທີ່ນໍາໜ້າໃນການສະໜອງນໍ້າປະປາ ແລະ ສຸຂະພິບານ. ນັບແຕ່ປີ 2004-2015, ເອດີບີ ໄດ້ຊ່ວຍໃຫ້ຄົວເຮືອນໃໝ່ຈໍານວນ 38.400 ຄົວເຮືອນ ໄດ້ມີນໍ້າປະປາໃຊ້, ແລະ ເກືອບ 40.000 ຄົວເຮືອນມີສິ່ງອໍານວຍຄວາມສະດວກດ້ານສຸຂະອານາໄມໃໝ່ ຫຼື ໄດ້ຮັບການປັບປຸງໃຫ້ດີຂຶ້ນ.

ການຊ່ວຍເຫຼືອນີ້ ແມ່ນສອດຄ່ອງກັບຄວາມຄືບໜ້າທີ່ສໍາຄັນໃນການສະໜອງນໍ້າໃຊ້ ແລະ ສຸຂະອານາໄມໃນບັນດາເຂດຕົວເມືອງໃຫຍ່ ແລະ ເມືອງນ້ອຍ ດ້ວຍອັດຕາສ່ວນຂອງພົນລະເມືອງທີ່ມີນໍ້າປະປາໃຊ້ເພີ່ມຂຶ້ນເກືອບສອງເທົ່າໃນໄລຍະ 20 ປີຜ່ານມາເຊິ່ງເພີ່ມຂຶ້ນຈາກ 33% ໃນປີ 1995 ເຖິງ 64% ໃນປີ 2015. ຄຽງຄູ່ກັນນັ້ນ, ຜູ້ທີ່ຢູ່ໃນເຂດຕົວເມືອງສ່ວນໃຫຍ່ (95%) ໄດ້ເຂົ້າເຖິງສຸຂະອານາໄມທີ່ໄດ້ຮັບການປັບປຸງໃຫ້ດີຂຶ້ນ ດ້ວຍສິ່ງອໍານວຍຄວາມສະດວກທີ່ມີຢູ່ກັບທີ່.

ເຖິງຢ່າງໃດກໍຕາມ, ຂະແໜງການນີ້ຍັງປະເຊີນກັບບັນຫາທ້າທາຍ ຍ້ອນຂໍ້ຈໍາກັດທາງດ້ານການຄຸ້ມຄອງ ແລະ ຊັບພະຍາກອນເຊິ່ງໄດ້ເຮັດໃຫ້ເກີດຊ່ອງຫວ່າງໃນການບໍລິການ ແລະ ເຮັດໃຫ້ເກີດຄວາມກົດດັນເພີ່ມຂຶ້ນຕໍ່ສິ່ງແວດລ້ອມ. ບັນດາຕົວເມືອງໃຫຍ່ ແລະ ເມືອງຕ່າງໆ, ໂດຍສະເພາະ ຢູ່ໃນເຂດຊາຍແດນຕິດກັບໄທ ແລະ ຫວຽດນາມທີ່ມີການເພີ່ມຂຶ້ນຂອງພົນລະເມືອງ ແລະ ການຂະຫຍາຍຕົວຂອງກິດຈະກໍາອຸດສາຫະກໍາ, ຊຶ່ງເຮັດໃຫ້ເກີດແຮງກົດດັນຕໍ່ກັບການບໍລິການຕ່າງໆ, ລວມທັງ ສາທາລະນຸປະໂພກຕ່າງໆ ແລະ ໜ່ວຍງານທີ່ສະໜອງນໍ້າໃຊ້, ການບໍາບັດນໍ້າເສຍ, ແລະ ການຄຸ້ມຄອງຂີ້ເຫຍື້ອ.

ເນື່ອງຈາກຜົນກະທົບຈາກການປ່ຽນແປງສະພາບດິນຟ້າອາກາດທີ່ຮຸນແຮງ, ລວມທັງ ໄພນໍ້າຖ້ວມທີ່ແກ່ຍາວ ແລະ ຮຸນແຮງຂຶ້ນ, ເອດີບີ ໄດ້ຕອບສະໜອງຕໍ່ກັບຄວາມຕ້ອງການທີ່ເພີ່ມຂຶ້ນຢ່າງໄວວາ ຂອງບັນດາຕົວເມືອງໃຫຍ່ອັນດັບສອງ ແລະ ເມືອງຕ່າງໆ ດ້ວຍການຊ່ວຍສະໜັບສະໜູນຕໍ່ການປັບປຸງສິ່ງແວດລ້ອມ ແລະ ຍົກລະດັບ ຫຼື ການກໍ່ສ້າງໂຄງລ່າງພື້ນຖານທີ່ "ທົນຕໍ່ທຸກສະພາບດິນຟ້າອາກາດ" ໄດ້.

ໃນເມືອງປາກເຊ, ຊຶ່ງເປັນສູນກາງຕົວເມືອງທີ່ໃຫຍ່ທີ່ສຸດທາງພາກໃຕ້ຂອງ ສປປ ລາວ ແລະ ເປັນສູນກາງການທ່ອງທ່ຽວທີ່ສໍາຄັນ, ທີ່ໄດ້ປະສົບກັບໄພນໍ້າຖ້ວມທີ່ຮ້າຍແຮງ ໃນຕະຫຼອດຫຼາຍປີທີ່ຜ່ານມາ ຊຶ່ງໄດ້ເຮັດໃຫ້ເກີດຄວາມເສຍຫາຍຢ່າງເປັນວົງກວ້າງ ແລະ ເປັນອຸປະສັກຕໍ່ກັບການລົງທຶນ. ໂດຍການສະໜັບສະໜູນຈາກ ເອດີບີ, ຕົວເມືອງດັ່ງກ່າວ ໄດ້ຮັບການຍົກລະດັບໂຄງລ່າງພື້ນຖານ ເພື່ອຫຼຸດຜ່ອນໄພນໍ້າຖ້ວມ ແລະ ປັບປຸງສິ່ງແວດລ້ອມ ໂດຍຜ່ານໂຄງການປັບປຸງສິ່ງແວດລ້ອມໃນຕົວເມືອງປາກເຊ ທີ່ພວມໄດ້ຮັບການຈັດຕັ້ງປະຕິບັດ (ອະນຸມັດໃນປີ 2012 ດ້ວຍທຶນກູ້ຢືມຈາກ ເອດີບີ ມູນຄ່າ 27,5 ລ້ານໂດລາສະຫະລັດ).



ເອດີບີ ໄດ້ໃຫ້ການຊ່ວຍເຫຼືອສຳລັບການປ້ອງກັນໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງເຊັ່ນ: ໃນເຂດໃຕ້ຂອງນະຄອນຫຼວງວຽງຈັນ ໂດຍການກໍ່ສ້າງເສັ້ນທາງເປັນແນວປ້ອງກັນຕາຝັ່ງເຈື່ອນ, ການປັບປຸງປະຕູນ້ຳ ແລະ ປັບປຸງລະບົບຊົນລະປະທານໃໝ່.

# ການສຶກສາ—ນັກສຶກສາຮຽນຈົບທີ່ກຽມພ້ອມຕອບສະໜອງຄວາມຕ້ອງການຂອງຕະຫຼາດແຮງງານ

ການຊ່ວຍເຫຼືອໃນຂະແໜງການນີ້ຂອງ ເອດີບີ ໃນຊຸມປີ 1990 ເບື້ອງຕົ້ນແມ່ນມີເປົ້າໝາຍແນໃສ່ການເພີ່ມອັດຕາເຂົ້າຮຽນ ແລະ ການສືບຕໍ່ຮຽນ ແລະ ການປັບປຸງຄຸນນະພາບຂອງການສຶກສາຊັ້ນປະຖົມ ແລະ ຊັ້ນມັດທະຍົມຕົ້ນ. ເອດີບີ ຍັງຊ່ວຍລັດຖະບານໃນການສ້າງຕັ້ງມະຫາວິທະຍາໄລແຫ່ງຊາດລາວໂດຍຜ່ານໂຄງການ ການສຶກສາຫຼັງຈົບມັດທະຍົມ (ສຳເລັດໃນປີ 2002).

ນັບແຕ່ ປີ 2004-2015, ເອດີບີ ໄດ້ສະໜັບສະໜູນການກໍ່ສ້າງ ຫຼື ຍົກລະດັບຫ້ອງຮຽນຫຼາຍກວ່າ 3.000 ຫ້ອງ, ເຮັດໃຫ້ເກີດຜົນປະໂຫຍດແກ່ນັກຮຽນປະມານ 300.000 ຄົນ. ຄູສອນຫຼາຍກວ່າ 47.000 ຄົນ ໄດ້ຮັບການຝຶກອົບຮົມເພື່ອຍົກລະດັບຄວາມຮູ້ ແລະ ວິຊາການຂອງພວກເຂົາ ແລະ ໄດ້ແຈກຢາຍປຶ້ມແບບຮຽນໃຫ້ໂຮງຮຽນຊັ້ນປະຖົມທັງໝົດໃນທົ່ວປະເທດ. ໂຄງການການສຶກສາຂັ້ນພື້ນຖານສອງໂຄງການ ຕະຫຼອດໃນໄລຍະນັ້ນ ໄດ້ກໍ່ສ້າງຫ້ອງການສຶກສາເມືອງຫຼາຍກວ່າ 100 ຫຼັງ, ແລະ ໄດ້ໃຫ້ການຝຶກອົບຮົມດ້ານການວາງແຜນ ແລະ ການຄຸ້ມຄອງ ແກ່ພະນັກງານຂະແໜງສຶກສາປະມານ 2.000 ຄົນ.

ນັບແຕ່ປີ 2004-2015, ເອດີບີ ໄດ້ສະໜັບສະໜູນການກໍ່ສ້າງ ຫຼື ຍົກລະດັບຫ້ອງຮຽນຫຼາຍກວ່າ 3.000 ຫ້ອງ, ເຮັດໃຫ້ເກີດຜົນປະໂຫຍດແກ່ນັກຮຽນເກືອບ 300.000 ຄົນ, ມີຄູສອນຫຼາຍກວ່າ 47.000 ຄົນທີ່ໄດ້ຮັບການຝຶກອົບຮົມເພື່ອປັບປຸງທັກສະຂອງພວກເຂົາ. ປຶ້ມແບບຮຽນທີ່ສຳຄັນແມ່ນໄດ້ສະໜອງໃຫ້ແກ່ໂຮງຮຽນປະຖົມໃນທົ່ວປະເທດ.

ປະຈຸບັນຈຸດສຸມຂອງຂະແໜງການແມ່ນການສົ່ງເສີມຄວາມແທດເໝາະ ແລະ ຄຸນນະພາບຂອງການສຶກສາຊັ້ນສູງ ໂດຍການຊ່ວຍເຫຼືອແກ່ມະຫາວິທະຍາໄລ ແລະ ສະຖາບັນອະຊີວະສຶກສາ ແລະ ອົບຮົມວິຊາຊີບຕ່າງໆ (TVET).

ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານການສຶກສາຊັ້ນສູງ (ສຳເລັດໃນປີ 2016 ດ້ວຍທຶນຊ່ວຍເຫຼືອລ້າຂອງ ເອດີບີ ມູນຄ່າ 26,2 ລ້ານໂດລາສະຫະລັດ), ໄດ້ຊ່ວຍມະຫາວິທະຍາໄລແຫ່ງຊາດລາວ, ມະຫາວິທະຍາໄລຈຳປາສັກ, ມະຫາວິທະຍາໄລ ສຸພານຸວົງ ແລະ ມະຫາວິທະຍາໄລສະຫວັນນະເຂດ ແລະ ພ້ອມທັງປັບປຸງໂຄງລ່າງພື້ນຖານ, ຍົກສູງມາດຕະຖານການສອນ ແລະ ປັບປຸງຫຼັກສູດທີ່ມີຢູ່ ເພື່ອເຮັດໃຫ້ເໝາະສົມ ແລະ ແທດເໝາະກັບຄວາມຕ້ອງການຂອງຕະຫຼາດແຮງງານໄດ້ດີຍິ່ງຂຶ້ນ.

ນາງ ອໍລາວັນ ໄຊຍະວົງ, ຄູສອນວິຊາຊີວະສາດຂອງມະຫາວິທະຍາໄລຈຳປາສັກ ຊຶ່ງເປັນຜູ້ໜຶ່ງທີ່ໄດ້ຮັບທຶນການສຶກສາຈາກໂຄງການທີ່ ເອດີບີ ໃຫ້ການສະໜັບສະໜູນດັ່ງກ່າວ ເພື່ອຮຽນຕໍ່ລະດັບປະລິນຍາໂທ, ໄດ້ເວົ້າວ່າ ມັນມີຄວາມແຕກຕ່າງຫຼາຍຕໍ່ການພັດທະນາດ້ານວິຊາການ ແລະ ການສອນຂອງລາວ.

ນາງເວົ້າວ່າ "ບໍ່ພຽງແຕ່ຂ້ອຍໄດ້ຮັບຄວາມຮູ້ເພີ່ມຕື່ມໃນວິຊາສະເພາະຂອງຂ້ອຍເທົ່ານັ້ນ ແຕ່ຫຼັກສູດ ແມ່ນຊ່ວຍໃຫ້ຂ້ອຍໄດ້ຮຽນຮູ້ເຖິງວິທີການເຮັດຄົ້ນຄ້ວາ ແລະ ການກະກຽມບົດສອນທີ່ມີປະສິດທິຜົນຫຼາຍຍິ່ງຂຶ້ນ. ໃນປະຈຸບັນຂ້ອຍມີຄວາມຊຳນານທີ່ຈະສິດສອນນັກສຶກສາໃນຊັ້ນຮຽນຫຼາຍຂຶ້ນກວ່າແຕ່ກ່ອນ".

ທ່ານນາງ ອໍລາວັນ ໄຊຍະວົງ, ຄູສອນວິຊາຊີວະສາດຂອງ ມະຫາວິທະຍາໄລຈໍາປາສັກ, ໄດ້ຮັບທຶນການສຶກສາ ປະລິນຍາໂທ ພາຍໃຕ້ ໂຄງການ ສ້າງຄວາມເຂັ້ມແຂງໃຫ້ວຽກ ງານການສຶກສາຊັ້ນສູງທີ່ ເອດີບີ ໃຫ້ການສະໜັບສະໜູນ.



ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານອາຊີວະສຶກສາ ແລະ ອົບຮົມວິຊາຊີບ ທີ່ພວມຈັດຕັ້ງປະຕິບັດ (ອະນຸມັດໃນປີ 2010 ຊຶ່ງເປັນທຶນຊ່ວຍເຫຼືອລ້າຈາກ ເອດີບີ ມູນຄ່າ 48 ລ້ານໂດລາສະຫະລັດ), ມີຈຸດປະສົງເພື່ອແກ້ໄຂບັນຫາສໍາຄັນທີ່ ນາຍຈ້າງເປັນຫ່ວງຄືວ່າ ນັກສຶກສາທີ່ຈົບໃໝ່ສ່ວນໃຫຍ່ ຍັງຂາດສີມື ທີ່ກຽມພ້ອມຈະໃຊ້ງານໄດ້ໃນຕະຫຼາດແຮງງານໃນໄລຍະ ໃໝ່ນີ້. ໂຄງການດັ່ງກ່າວ ປະກອບມີການຝຶກອົບຮົມໃຫ້ແກ່ຄູສອນໃນຂະແໜງວິຊາຊີບທີ່ສໍາຄັນ ຊຶ່ງໃນປະຈຸບັນຍັງຂາດຕໍ່ ການສະໜອງ ເຊັ່ນ ການກໍ່ສ້າງ, ກົນຈັກ, ການຜະລິດເຄື່ອງເຟີນິເຈີ, ແລະ ຄວາມຮູ້ພື້ນຖານດ້ານທຸລະກິດ, ພ້ອມນັ້ນ, ກໍສະໜັບສະໜູນການປັບປຸງຫຼັກສູດ ແລະ ການເຊື່ອມຕໍ່ກັບພາກເອກະຊົນ. ທຶນຊ່ວຍເຫຼືອເພື່ອການຝຶກອົບຮົມ ແມ່ນມີເປົ້າໝາຍແນໃສ່ນັກສຶກສາຜູ້ທີ່ຈາກຄອບຄົວທີ່ມີລາຍໄດ້ຕໍ່າ, ແລະ ການກໍ່ສ້າງຫໍພັກນັກສຶກສາຫຼັງໃໝ່ທີ່ມີພື້ນທີ່ 50% ເພື່ອໄວ້ຮອງຮັບສະເພາະນັກສຶກສາເພດຍິງ, ໂດຍມຸ່ງເນັ້ນ ເພື່ອຮັບປະກັນການມີສ່ວນຮ່ວມຂອງແມ່ຍິງ ແລະ ກຸ່ມຄົນດ້ອຍໂອກາດອື່ນໆໃຫ້ເພີ່ມຂຶ້ນ.

ນັກຮຽນແປງເຄື່ອງຈັກ ນາງ ສີລິໄຊ ວົງວິຈິດ ຢູ່ທີ່ວິທະຍາເຂດອະຊີວະ ສຶກສາແລະອົບຮົມວິຊາຊີບ ແຂວງຈໍາປາສັກ.



ນາງ ສີຣິໄຊ ວົງວິຈິດ, ອາຍຸ 20 ປີ, ເປັນນັກສຶກສາໃນພາກວິຊາຮຽນແປງເຄື່ອງຈັກທີ່ຢູ່ໜຶ່ງໃນສອງວິທະຍາເຂດອະຊີວະສຶກສາແລະອົບຮົມວິຊາຊີບໃຫຍ່ທີ່ໃຫ້ການສຶກສາ ແລະ ອົບຮົມວິຊາຊີບ ໃນແຂວງຈຳປາສັກ, ມອງເຫັນເຖິງໂອກາດທີ່ຈະມີວຽກທີ່ດີ ແລະ ທັງສ້າງລາຍຮັບໄດ້ ຊຶ່ງເຮັດໃຫ້ນາງໝົດຄວາມສົງໄສທັງໝົດທີ່ລາວມີຕໍ່ກັບການຕັດສິນໃຈເພື່ອລົງທະບຽນຮຽນໃນຫຼັກສູດນີ້ ຊຶ່ງໂດຍປົກກະຕິແລ້ວສ່ວນໃຫຍ່ຈະມີແຕ່ຜູ້ຊາຍ.

ນາງໄດ້ເວົ້າວ່າ "ຂ້ອຍຮັກວິຊານີ້ ແລະ ຄວາມຕ້ອງການໃນການສ້ອມແປງເຄື່ອງຈັກລົດໄຖນາກໍ່ມີຫຼາຍ, ດັ່ງນັ້ນ, ຂ້ອຍຈຶ່ງມອງເຫັນໂອກາດທາງທຸລະກິດໃນວິຊານີ້. ຫຼັກສູດນີ້ຈະເຮັດໃຫ້ຂ້ອຍມີສີມື ແລະ ຄວາມຮູ້ທີ່ຈະເຮັດໃນສິ່ງດັ່ງກ່າວນັ້ນໄດ້".

# ດ້ານສາທາ - ການປັບປຸງ ການດູແລຮັກສາສຸຂະພາບແມ່, ເດັກແດງ ແລະ ເດັກນ້ອຍ

ການບໍລິການດ້ານສາທາທີ່ມີຄຸນນະພາບຕໍ່າ ແລະ ການເຂົ້າເຖິງໄດ້ຍາກ ແມ່ນສ່ວນປະກອບສຳຄັນຕໍ່ກັບຄວາມທຸກຍາກ. ໃນຊຸມປີ 1990, ການສະໜັບສະໜູນຄັ້ງທຳອິດໃນຂະແໜງການນີ້ຂອງ ເອດີບີ ມີເປົ້າໝາຍແນໃສ່ ເພື່ອປັບປຸງການບໍລິການໃນເຂດຊົນນະບົດທີ່ທຸກຍາກ, ດ້ວຍການຊ່ວຍເຫຼືອເພື່ອສ້າງສຸກສາລາ, ການຝຶກອົບຮົມພະນັກງານສາທາລະນະສຸກ, ແລະສ້າງກອງທຶນໝູນວຽນກຸ່ມຕົນເອງເພື່ອທົດແທນຄ່າໃຊ້ຈ່າຍໃນການດຳເນີນງານຂອງສຸກສາລາ ແລະ ຢາປົວພະຍາດ.

ໃນຊຸມປີມໍ່ໆມານີ້, ແຜນການພັດທະນາຂະແໜງສາທາລະນະສຸກ (ອະນຸມັດໃນປີ 2009 ແລະສຳເລັດໃນປີ 2015) - ເປັນການຊ່ວຍເຫຼືອແບບອີງໃສ່ແຜນງານຄັ້ງທຳອິດຂອງ ເອດີບີ ສຳລັບຂະແໜງນີ້ ໄດ້ສຸມໃສ່ການປັບປຸງດ້ານສຸຂະພາບແລະ ໂພຊະນາການໃນກຸ່ມຄົນທີ່ອ່ອນແອ (ຜູ້ທຸກຍາກ, ແມ່ຍິງ, ຊົນເຜົ່າ) ໃນ 8 ແຂວງ. ແຜນງານດັ່ງກ່າວໄດ້ດຳເນີນການມາຫຼາຍກວ່າ 5 ປີຈົນເຖິງປີ 2015 ຊຶ່ງໄດ້ຮັບທຶນຊ່ວຍເຫຼືອລ້າຈາກ ເອດີບີ ມູນຄ່າ 23 ລ້ານໂດລາສະຫະລັດ, ໄດ້ບັນລຸຫຼາຍເປົ້າໝາຍຂອງການປະຕິບັດງານພາຍໃຕ້ແຜນງານດັ່ງກ່າວ, ລວມທັງ ການເຂົ້າເຖິງການບໍລິການຮັກສາສຸຂະພາບຂອງແມ່, ເດັກແດງ ແລະ ເດັກນ້ອຍໄດ້ເພີ່ມຂຶ້ນ.

ໂຄງການພັດທະນາບ້ານແບບຢ່າງດ້ານສາທາລະນະສຸກ ໃນພາກເໜືອຂອງ ສປປ ລາວ ເຊິ່ງໄດ້ຮັບການຊ່ວຍເຫຼືອລ້າທາງດ້ານການເງິນຈາກ ກອງທຶນຫລຸດຜ່ອນຄວາມທຸກຍາກຂອງປະເທດຍີ່ປຸ່ນ ມູນຄ່າ 3 ລ້ານໂດລາສະຫະລັດ (ອະນຸມັດໃນປີ 2009 ແລະ ສຳເລັດໃນປີ 2013) ແມ່ນກິດຈະກຳລິເລີ່ມ ເສີມຕື່ມໃຫ້ກັບແຜນງານ ແລະ ເພື່ອປັບປຸງການບໍລິການໃຫ້ກັບກຸ່ມຄົນທີ່ອ່ອນດ້ອຍ, ລວມທັງ ກຸ່ມຊົນເຜົ່າຕ່າງໆ, ແລະ ເພື່ອພັດທະນາແບບແຜນສຳລັບການມີສ່ວນຮ່ວມຂອງຊຸມຊົນຢູ່ໃນຂັ້ນບ້ານເຊິ່ງ ຈະສາມາດຜັນຂະຫຍາຍນຳໃຊ້ໃນລະດັບປະເທດໄດ້. ໂຄງການນີ້ ໄດ້ຮັບການຈັດຕັ້ງປະຕິບັດໃນ 100 ບ້ານໃນແຂວງ ຫົວພັນ ແລະ ຊຽງຂວາງ. ໂຄງການນີ້ ໄດ້ບັນລຸເປົ້າໝາຍ ຫຼື ເກີນຄາດໝາຍທີ່ສຸດ, ລວມທັງ ການພັດທະນາ

ແຜນງານປັບປຸງການຄຸ້ມຄອງຂະແໜງສາທາລະນະສຸກ - ແຜນງານການຊ່ວຍເຫຼືອທຳອິດທີ່ອີງໃສ່ຂະແໜງການຂອງ ເອດີບີ ໄດ້ບັນລຸເປົ້າໝາຍຫຼາຍຢ່າງຂອງການປະຕິບັດງານເພື່ອປັບປຸງການວາງແຜນດ້ານສາທາລະນະສຸກ ແລະ ການສ້າງງົບປະມານ; ເພີ່ມການເຂົ້າເຖິງການດູແລສຸຂະພາບຂອງແມ່, ເດັກແດງ ແລະ ເດັກນ້ອຍ; ແລະ ສ້າງຄວາມເຂັ້ມແຂງດ້ານຊັບພະຍາກອນມະນຸດ.



ສະມາຊິກຂອງກຸ່ມຊົນເຜົ່າລວມຕົວກັນທີ່ບ້ານຜາເຜີ້ງ ເມືອງ ຄູນ, ແຂວງ ຊຽງຂວາງ ເພື່ອເຂົ້າຮ່ວມກິດຈະກຳ ແລະ ການຮຽນຮູ້ ຊຶ່ງສະໜອງໃຫ້ພາຍໃຕ້ໂຄງການພັດທະນາບ້ານແບບຢ່າງດ້ານສາທາລະນະສຸກໃນພາກເໜືອຂອງສປປ ລາວ ຊຶ່ງໄດ້ຮັບທຶນສະໜັບສະໜູນຈາກກອງທຶນຫຼຸດຜ່ອນຄວາມທຸກຍາກຂອງປະເທດຍີ່ປຸ່ນຂອງ ເອດີບີ.

ແຜນງານ ດ້ານສາທາລະນະສຸກຂອງບ້ານ ແລະ ການສ້າງຄູ່ມືແນະນຳສຳລັບການສ້າງບ້ານແບບຢ່າງດ້ານສາທາລະນະສຸກແຫ່ງຊາດ.

"ທ່ານ ປະສົງສິດ ບຸບຜາ, ຫົວໜ້າກົມແຜນການແລະການຮ່ວມມືສາກົນ, ກະຊວງສາທາລະນະສຸກໄດ້ກ່າວວ່າ ອົງປະກອບສຳຄັນໃຫ້ແກ່ການພັດທະນາບ້ານແບບຢ່າງດ້ານສາທາລະນະສຸກໃຫ້ມີຜົນສຳເລັດ ແມ່ນການປ່ຽນແນວຄວາມຄິດຂອງປະຊາຊົນກ່ຽວກັບສຸຂະພາບ ແລະ ການປະຕິບັດກ່ຽວກັບການຮັກສາສຸຂະພາບ. ນອກເໜືອຈາກການສະໜອງຢາ ແລະ ຖົງຢາປະຈຳບ້ານ, ພວກເຮົາໄດ້ສຸມໃສ່ການສຶກສາອົບຮົມຊາວບ້ານເພື່ອສ້າງຄວາມເຂັ້ມແຂງດ້ານການວາງແຜນ, ການຈັດຕັ້ງປະຕິບັດ ແລະ ການຄຸ້ມຄອງກິດຈະກຳການດູແລສຸຂະພາບຂັ້ນພື້ນຖານ". "ພວກເຮົາໄດ້ນຳໃຊ້ຫຼາຍວິທີ ເຊັ່ນການຕິດຕັ້ງໂທລະໂຄ່ງຢູ່ກາງບ້ານໃນແຕ່ລະບ້ານ ເພື່ອໂຄສະນາແຜນງານສຸຂະສຶກສາ ແລະ ພວກເຮົາໄດ້ເລີ່ມຕົ້ນຕັ້ງເປົ້າໝາຍໃສ່ເດັກນ້ອຍຜູ້ທີ່ສາມາດຮັບເອົາຄວາມຮູ້ດ້ານສຸຂະສຶກສາໄດ້ງ່າຍ ແລະ ຫຼັງຈາກນັ້ນກໍໄປບອກພໍ່ແມ່ຂອງພວກເຂົາ."

ເອດີບີ ຍັງໄດ້ມີສ່ວນຮ່ວມໃນການຊ່ວຍເຫຼືອ ສປປ ລາວ ແລະ ເພື່ອນບ້ານ ຄື ກຳປູເຈຍ ແລະ ຫວຽດນາມ ເພື່ອປັບປຸງຂີດຄວາມສາມາດຂອງພວກເຂົາໃນການຕິດຕາມ ແລະ ປ້ອງກັນການແຜ່ລະບາດຂອງພະຍາດຕິດແປດທີ່ເກີດຂຶ້ນທ່າມກາງຄວາມກັງວົນກ່ຽວກັບຄວາມອາດສາມາດໃນການລະບາດຂອງໂຣກລະບາດຂ້າມພົມແດນ ເຊັ່ນ SARS (ໂຣກລະບົບທາງເດີນຫາຍໃຈຮຸນແຮງ), ໄຂ້ຫວັດສັດປີກ ແລະ ພະຍາດເອດ/ເຊື້ອເອດໄອວີ.

ໂຄງການທຳອິດເພື່ອຄວບຄຸມພະຍາດຕິດຕໍ່ພາຍໃນອະນຸພາກພື້ນແມ່ນ້ຳຂອງ (ສຳເລັດໃນປີ 2010 ດ້ວຍທຶນຊ່ວຍເຫຼືອລ້າມູນຄ່າ 6 ລ້ານໂດລາສະຫະລັດ ແກ່ ສປປ ລາວ) ໄດ້ຊ່ວຍສາມປະເທດສ້າງຂີດຄວາມສາມາດຂອງພວກເຂົາໃນການຕອບສະໜອງ ແລະ ປ້ອງກັນເຫດສຸກເສີນ ແລະ ຈັດຕັ້ງປະຕິບັດລະບຽບການດ້ານສຸຂະພາບສາກົນຂອງອົງການອະນາໄມໂລກ ແລະ ຍຸດທະສາດອາຊີ-ປາຊີຟິກ ສຳລັບພະຍາດລະບາດທີ່ເກີດຂຶ້ນ. ໂຄງການຕໍ່ມາ ຊຶ່ງໄດ້ຖືກອະນຸມັດໃນປີ 2010 (ຈາກ 2010-2015 ດ້ວຍທຶນຊ່ວຍເຫຼືອລ້າມູນຄ່າ 12 ລ້ານໂດລາສະຫະລັດ ໃຫ້ແກ່ ສປປລາວ) ໄດ້ສ້າງຄວາມເຂັ້ມແຂງເພີ່ມຕື່ມແກ່ ລະບົບການເຝົ້າລະວັງ ແລະ ການຕອບໂຕ້ລະດັບພາກພື້ນ ເພື່ອຕໍ່ສູ້ກັບການແຜ່ລະບາດຂອງພະຍາດຕ່າງໆ ລວມທັງ ພະຍາດໄຂ້ຫວັດສັດປີກທີ່ເປັນໄພອັນຕະລາຍໃນອະນຸພາກພື້ນແມ່ນ້ຳຂອງ ໃນປີ 2008.

## ການພັດທະນາພາກເອກະຊົນ—ການສ້າງບັນດາຫົວໜ່ວຍທຸລະກິດ

ໂຄງການທີສອງກ່ຽວກັບ ການພັດທະນາພາກເອກະຊົນ ແລະ ວິສາຫະກິດຂະໜາດນ້ອຍ ແລະ ກາງ (ວນກ) ໄດ້ຊ່ວຍໃຫ້ເກີດຜົນສຳເລັດທີ່ສຳຄັນຫຼາຍຢ່າງ ລວມທັງ ການຈັດຕັ້ງປະຕິບັດລະບົບການຈົດທະບຽນວິສາຫະກິດແຫ່ງຊາດຜ່ານເວັບໄຊ, ການພັດທະນາລະບົບຂໍ້ມູນຂ່າວສານການປ່ອຍສິນເຊື່ອຜ່ານເວັບໄຊ, ແລະ ການສ້າງຕັ້ງສູນການປະເມີນຜົນກະທົບຂອງຮ່າງນິຕິກຳ.

ການສະໜັບສະໜູນຂອງ ເອດີບີ ສຳລັບພາກເອກະຊົນ ແມ່ນກວ້າງຂວາງ ແລະ ລວມທັງ ການຊ່ວຍເຫຼືອໂຄງການເຂື່ອນໄຟຟ້ານ້ຳເທີນ 2 (ເງິນກູ້ໃຫ້ພາກເອກະຊົນຄັ້ງທຳອິດຂອງລາວໃນປີ 2005) ແລະ ການຊ່ວຍເຫຼືອ ເພື່ອຂະຫຍາຍ ແລະ ພັດທະນາວິສາຫະກິດຈຸລະພາກ, ຂະໜາດນ້ອຍ ແລະ ກາງ (MSMEs) ເຊິ່ງມີການຈ້າງງານຫຼາຍກວ່າ 80% ຂອງການຈ້າງງານທັງໝົດໃນບໍລິສັດທີ່ຈົດທະບຽນ.

ການເຮັດວຽກຮ່ວມກັບບັນດາຜູ້ໃຫ້ທຶນອື່ນໆ, ເອດີບີ ໄດ້ຊ່ວຍລັດຖະບານໃນການປັບປຸງສະພາບແວດລ້ອມດ້ານລະບຽບການ ແລະ ການເຂົ້າເຖິງການບໍລິການສຳລັບ ວິສາຫະກິດຂະໜາດນ້ອຍ ແລະ ກາງ. ນັບແຕ່ປີ 2006-2013, ໂຄງການການພັດທະນາພາກເອກະຊົນ ແລະ ວິສາຫະກິດຂະໜາດນ້ອຍ ແລະ ກາງ ຄັ້ງທີສອງ (ທຶນກູ້ຢືມ ແລະ ທຶນຊ່ວຍເຫຼືອລ້າຂອງເອດີບີ ມູນຄ່າ 34,4 ລ້ານໂດລາສະຫະລັດ), ພ້ອມກັບການຊ່ວຍເຫຼືອດ້ານວິຊາການທີ່ກ່ຽວຂ້ອງ, ແລະ ກໍໄດ້ຊ່ວຍໃຫ້ເກີດມີຜົນສຳເລັດທີ່ສຳຄັນຫຼາຍຢ່າງ. ສິ່ງເຫຼົ່ານີ້ລວມມີ ການນຳໃຊ້ລະບົບການຈົດທະບຽນວິສາຫະກິດຜ່ານເວັບໄຊ, ການພັດທະນາລະບົບຂໍ້ມູນຂ່າວສານດ້ານສິນເຊື່ອຜ່ານເວັບໄຊ, ການສ້າງສູນການປະເມີນຜົນກະທົບຂອງຮ່າງນິຕິກຳ, ແລະ ການສ້າງການເຊື່ອມຕໍ່ທີ່ເຂັ້ມແຂງລະຫວ່າງ ວິສາຫະກິດຂະໜາດນ້ອຍ ແລະ ກາງດ້ວຍກັນໃນທົ່ວພາກພື້ນອາຊຽນ ໂດຍຜ່ານຮູບແບບເວທີການຄ້າທາງເອເລັກໂຕຣນິກ.

ໃນທ້າຍປີ 2012, ຈຳນວນວິສາຫະກິດເອກະຊົນທີ່ຈົດທະບຽນໄດ້ເພີ່ມຂຶ້ນເຖິງ 91.000 ຫົວໜ່ວຍ ເມື່ອທຽບກັບຈຳນວນ 35.000 ຫົວໜ່ວຍ ໃນປີ 2008, ເຊິ່ງໃນນີ້ ຈຳນວນເຄິ່ງໜຶ່ງແມ່ນແມ່ຍິງເປັນເຈົ້າຂອງວິສາຫະກິດ.

ເອດີບີ ຍັງໄດ້ມີສ່ວນຮ່ວມຢ່າງຫ້າວຫັນໃນການສະໜັບສະໜູນການຮ່ວມທຶນລະຫວ່າງພາກລັດ - ເອກະຊົນ ຊຶ່ງຄາດວ່າຈະມີບົດບາດເພີ່ມຂຶ້ນໃນການພັດທະນາຕ່າງໆຂອງປະເທດ, ລວມທັງ ໃນຂະແໜງການໄຟຟ້າ.

# ການປົກຄອງບໍລິຫານ ແລະ ການຄຸ້ມຄອງລັດ: ລັດທີ່ເຂັ້ມແຂງຂຶ້ນ

ການສະໜັບສະໜູນຂອງ ເອດີບີ ໃນຂະແໜງການລັດແມ່ນເລີ່ມແຕ່ປີ 1998 ໂດຍມີການຊ່ວຍເຫຼືອທາງດ້ານວິຊາການ ສໍາລັບການສ້າງຕັ້ງຫ້ອງການກວດສອບບັນຊີແຫ່ງລັດ. ນັບຕັ້ງແຕ່ນັ້ນມາ, ເອດີບີ ໄດ້ສະໜອງການຊ່ວຍເຫຼືອທາງດ້ານວິຊາການ ເພື່ອສ້າງຄວາມເຂັ້ມແຂງໃນການຄຸ້ມຄອງການເງິນຂອງລັດ, ຊ່ວຍປູທາງໃນການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍງົບປະມານໃນປີ 2006, ແລະ ກົດໝາຍວ່າດ້ວຍ ການກວດສອບບັນຊີໃນປີ 2007. ການຊ່ວຍເຫຼືອຂອງ ເອດີບີ ຍັງຊ່ວຍລັດຖະບານໃນການປັບປຸງການຄຸ້ມຄອງລາຍຮັບຂອງຕົນ, ລວມທັງ ລາຍຮັບທີ່ໄດ້ມາຈາກໂຄງການເຂື່ອນໄຟຟ້ານໍ້າເທີນ 2 ແລະ ໄດ້ຊ່ວຍເພື່ອປັບປຸງຂອບລາຍຈ່າຍໄລຍະກາງ.

ແຜນງານການປົກຄອງບໍລິຫານ ແລະ ການພັດທະນາຄວາມສາມາດໃນການຄຸ້ມຄອງລັດ (ອະນຸມັດໃນປີ 2012 ດ້ວຍເງິນກູ້ ແລະ ທຶນຊ່ວຍເຫຼືອລ້າຈາກ ເອດີບີ ມູນຄ່າ 31 ລ້ານໂດລາສະຫະລັດ) ທີ່ພວມຈັດຕັ້ງປະຕິບັດ ແມ່ນໄດ້ໃຫ້ການສະໜັບສະໜູນເພີ່ມຕື່ມ ສໍາລັບ ການຄຸ້ມຄອງການເງິນລັດ ແລະ ການປະຕິຮູບການປົກຄອງ, ໃນຂະນະດຽວກັນ ການຊ່ວຍເຫຼືອທາງດ້ານວິຊາການ ກໍໄດ້ຜັນຂະຫຍາຍໄປຍັງບັນດາກິດຈະກໍາສ້າງຄວາມເຂັ້ມແຂງດ້ານການປົກຄອງບໍລິຫານອື່ນໆ, ລວມທັງ ການນໍາໃຊ້ຍຸດທະສາດຕ້ານການສໍ້ລາດບັງຫຼວງ.

ແຜນງານສ້າງຄວາມເຂັ້ມແຂງໃນການຄຸ້ມຄອງດ້ານການເງິນລັດທີ່ໄດ້ຮັບການຊ່ວຍເຫຼືອຈາກ ເອດີບີ ໄດ້ສະໜັບສະໜູນການສໍາເລັດຂີດໝາຍທີ່ສໍາຄັນສໍາລັບປະເທດ, ລວມທັງ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ງົບປະມານ ແລະ ກົດໝາຍວ່າດ້ວຍການກວດສອບບັນຊີ.

# ການປັບປຸງປະສິດທິຜົນດ້ານການດຳເນີນງານ ແລະ ກົງຈັກການຈັດຕັ້ງ

ການດຳເນີນງານຂອງ ເອດີບີ ໃນປີ 2012-2016 ໄດ້ຖືກປະເມີນວ່າ ມີຄຸນນະພາບ ຊຶ່ງມີຄວາມກ່ຽວຂ້ອງ, ມີປະສິດທິພາບ, ມີຄວາມຍືນຍົງ ແລະ ມີລະດັບສູງ ດ້ານປະສິດທິຜົນ ຕໍ່ການພັດທະນາ.

ການດຳເນີນງານຂອງ ເອດີບີ ໃນສປປ ລາວ ຕະຫຼອດໄລຍະ 5 ປີທີ່ຜ່ານມາ (2012-2016) ໄດ້ຮັບການປະເມີນວ່າມີຄຸນນະພາບດີ ເຊັ່ນວ່າ ຕອບສະໜອງຕໍ່ຄວາມຕ້ອງການ, ມີປະສິດທິພາບ, ມີຄວາມຍືນຍົງ ແລະ ມີປະສິດທິຜົນໃນການພັດທະນາສູງ. ອັດຕາສ່ວນຂອງບັນດາໂຄງການໃນປະເທດ ທີ່ໄດ້ຮັບການປະເມີນ "ປະຕິບັດໄດ້ຕາມເປົ້າໝາຍ" ໄດ້ເພີ່ມຂຶ້ນເຖິງ 90,0 % ໃນປີ 2016, ແລະ ເກືອບບໍ່ມີໂຄງການທີ່ມີບັນຫາ ໃນປີ 2016.

ເຖິງແມ່ນວ່າການດຳເນີນງານຂອງ ເອດີບີ ໂດຍລວມມີຄວາມເຂັ້ມແຂງ, ແຕ່ຍັງມີຫຼາຍຂົງເຂດທີ່ສາມາດປັບປຸງໃຫ້ດີຂຶ້ນໄດ້, ລວມທັງການປະຕິບັດໄລຍະເວລາຂອງການເບີກຈ່າຍ, ໄລຍະເວລາຂອງການເລີ່ມຕົ້ນ ແລະ ພ້ອມທັງການຈັດຕັ້ງປະຕິບັດໂຄງການ, ການຄຸ້ມຄອງການເງິນໂຄງການ ແລະ ການປະສານງານຂອງບັນດາໜ່ວຍງານຈັດຕັ້ງປະຕິບັດ ແລະ ບໍລິຫານໂຄງການ. ຕົວຢ່າງ, ໂຄງການສາຍສົ່ງໄຟຟ້າພາກເໜືອອະນຸພາກພື້ນແມ່ນ້ຳຂອງ ແລະ ໂຄງການປັບປຸງຕາໜ່າງການຂົນສົ່ງທາງພາກເໜືອອະນຸພາກພື້ນແມ່ນ້ຳຂອງຄັ້ງທີສອງ ຊຶ່ງທັງສອງໂຄງການໄດ້ຮັບຜົນກະທົບຈາກການເບີກຈ່າຍທີ່ຊັກຊ້າ ອັນເນື່ອງມາຈາກ ບັນຫາທີ່ກ່ຽວກັບການຄຸ້ມຄອງຈັດການດ້ານສັນຍາ ແລະ ການກະກຽມຄວາມພ້ອມຂອງໂຄງການ, ໃນຂະນະທີ່ການອອກແບບໂຄງການທີ່ມີຂໍ້ບົກຜ່ອງ ຍັງສົ່ງຜົນຕໍ່ການຈັດຕັ້ງປະຕິບັດ ແລະ ຜົນໄດ້ຮັບໂດຍລວມຂອງໂຄງການຊຶ່ງໃນນັ້ນມີໂຄງການພັດທະນາລະບົບສາທາລະນະສຸກ ແລະ ໂຄງການສົ່ງເສີມການຜະລິດກະສິກຳເພື່ອເປັນສິນຄ້າ.

ເພື່ອເລັ່ງຂັ້ນຕອນການອະນຸມັດສັນຍາ ແລະ ການເບີກຈ່າຍເງິນໂຄງການ, ເອດີບີ ໄດ້ດຳເນີນການຫຼາຍບາດກ້າວ, ລວມທັງ ໃຫ້ການສະໜັບສະໜູນ ແກ່ ບັນດາອົງການຄຸ້ມຄອງໂຄງການໃນການກະກຽມເອກະສານ ເພື່ອຈັດຈ້າງທີ່ປຶກສາຂອງໂຄງການ. ໃນປະຈຸບັນ, ເອດີບີ ຍັງລວມເອົາການ ໃຫ້ການສະໜັບສະໜູນດ້ານການສ້າງຂີດຄວາມສາມາດ ສຳລັບພະນັກງານທັງໝົດທີ່ພວມຈັດຕັ້ງປະຕິບັດໂຄງການໃໝ່ຕ່າງໆ, ແລະ ໄດ້ປັບປຸງການກັ່ນຕອງຄວາມພ້ອມຂອງໂຄງການ ເພື່ອເລັ່ງເຮັດໃຫ້ການເລີ່ມຈັດຕັ້ງປະຕິບັດໂຄງການໄດ້ໄວ ກ່ອນທີ່ໂຄງການຈະມີຜົນບັງຄັບໃຊ້. ລູກຄ້າຂອງສຳນັກງານ ເອດີບີ ປະຈຳ ສປປ ລາວ ໄດ້ຮັບການຈັດລະດັບໄປທາງບວກທີ່ດີຫຼາຍຕໍ່ກັບການຊີ້ນຳຂອງສຳນັກງານດັ່ງກ່າວໃນການຈັດຕັ້ງປະຕິບັດໂຄງການ.

## ການຮ່ວມມືກັບການຈັດຕັ້ງທາງສັງຄົມ

ເອດີບີ ຮັບຮູ້ວ່າການພົວພັນກັບອົງການຈັດຕັ້ງທາງສັງຄົມ ຊຶ່ງລວມທັງສະມາຄົມບໍ່ຫວັງຜົນກຳໄລແລະອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ (CSOs) ສາມາດຊ່ວຍເພີ່ມປະສິດທິຜົນຂອງການພັດທະນາ, ເຮັດໃຫ້ເກີດນະວະຕະກຳໃໝ່ເພີ່ມຂຶ້ນ ແລະ ໂຄງການທີ່ມີປະສິດທິຜົນ, ແລະ ຊ່ວຍບໍລິຫານຄວາມສ່ຽງຕ່າງໆ. ເອດີບີ ມີມູນເຊື້ອມາດົນພໍສົມຄວນໃນການເຮັດວຽກຮ່ວມກັບອົງການຈັດຕັ້ງທາງສັງຄົມຢູ່ໃນຫຼາຍດ້ານ ໃນນັ້ນ ລວມທັງ ການຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາໂຄງການຕ່າງໆ.

ໃນໂຄງການພັດທະນາໂຄງລ່າງກະສິກຳຕາມແລວເສດຖະກິດຕາເວັນອອກ-ຕາເວັນຕົກອະນຸພາກພື້ນແມ່ນ້ຳຂອງ (ອະນຸມັດໃນປີ 2013), ເອດີບີ ໄດ້ເຮັດວຽກຮ່ວມກັບກຸ່ມຜູ້ໃຊ້ນ້ຳເຊິ່ງເປັນກຸ່ມທີ່ມີບົດບາດໃຈກາງທີ່ສຳຄັນ ໃນການຜັນຂະຫຍາຍຜົນສຳເລັດຂອງໂຄງການ ແລະ ຊ່ວຍໃຫ້ຮັບປະກັນວ່າ ການລົງທຶນໃນໂຄງລ່າງພື້ນຖານດັ່ງກ່າວຈະມີຄວາມຍືນຍົງໃນໄລຍະຍາວ. ໃນໂຄງການສົ່ງເສີມການຜະລິດກະສິກຳເພື່ອເປັນສິນຄ້າ, ກຸ່ມໂຮງສີເຂົ້າ, ກຸ່ມປຸງແຕ່ງ ແລະ ກຸ່ມການຄ້າໄດ້ເຮັດວຽກຮ່ວມກັບ ເອດີບີ ເພື່ອປັບປຸງຄວາມຍືນຍົງໃຫ້ແກ່ການຜະລິດກະສິກຳເພື່ອການຄ້າຂອງຊາວກະສິກອນຂະໜາດນ້ອຍຢູ່ໃນບັນດາສີ່ແຂວງເປົ້າໝາຍ.

ໃນໂຄງການພັດທະນາອ່າງນ້ຳງື່ມທີ່ໄດ້ຮັບການຊ່ວຍເຫຼືອຈາກເອດີບີ, ສາມອົງການຈັດຕັ້ງເຊັ່ນ: ຄະນະກຳມະການພັດທະນາບ້ານຂັ້ນ, ຄະນະກຳມະການແນວລາວສ້າງຊາດ, ແລະ ສະຫະພັນແມ່ຍິງລາວ, ມີບົດບາດຫຼາຍດ້ານໃນການຈັດຕັ້ງປະຕິບັດໂຄງການ ແລະ ຊ່ວຍໃນການຕິດຕາມກວດກາ ແລະ ປະເມີນຜົນ ບັນດາກິດຈະກຳປົກປ້ອງ ແລະ ພັດທະນາສັງຄົມ. ກຸ່ມອົງການຈັດຕັ້ງທາງສັງຄົມ ຍັງໄດ້ເຮັດວຽກຮ່ວມກັບລັດຖະບານ ແລະ ເອດີບີ ກ່ຽວກັບການປັບປຸງສຸຂະອານາໄມ ແລະ ສິ່ງແວດລ້ອມ ທີ່ຂັບເຄື່ອນໂດຍຊຸມຊົນ ພາຍໃຕ້ໂຄງການນ້ຳປະປາແລະສຸຂາພິບານໃນເຂດພາກເໜືອ ແລະ ພາກກາງ (ໄດ້ຮັບການອະນຸມັດໃນປີ 2010 ດ້ວຍທຶນຊ່ວຍເຫຼືອລ້າມູນຄ່າ 6,6 ລ້ານໂດລາສະຫະລັດ), ໂຄງການນ້ຳປະປາ ແລະ ສຸຂາພິບານຕົວເມືອງນ້ອຍ (ອະນຸມັດໃນປີ 2009 ດ້ວຍທຶນຊ່ວຍເຫຼືອລ້າ 28,8 ລ້ານໂດລາສະຫະລັດ) ໂຄງການນ້ຳປະປາ ແລະ ສຸຂາພິບານ (ອະນຸມັດໃນປີ 2013 ດ້ວຍທຶນກູ້ຢືມມູນຄ່າ 35 ລ້ານໂດລາສະຫະລັດ) ແລະ ໂຄງການປັບປຸງສິ່ງແວດລ້ອມໃນຕົວເມືອງປາກເຊ.

ການຮ່ວມມືກັບບັນດາອົງການຈັດຕັ້ງທາງສັງຄົມລວມທັງອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານໄດ້ ຊ່ວຍເພີ່ມທະວີຄວາມເຂັ້ມແຂງດ້ານປະສິດທິຜົນ ແລະ ຄວາມຍືນຍົງຂອງການດຳເນີນງານຂອງ ເອດີບີ.

# ສິ່ງທ້າທາຍ ແລະ ເປົ້າໝາຍໃນອະນາຄົດ

ແຜນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ VIII ຂອງ ສປປ ລາວປີ 2016-2020 ໄດ້ວາງເປົ້າໝາຍການເຕີບໂຕແບບຍືນຍົງ ແລະ ທົ່ວເຖິງໃນອັດຕາ 7,2% ຕໍ່ປີ, ເຊິ່ງຈະຊ່ວຍໃຫ້ ສປປ ລາວ ຫຼຸດພົ້ນອອກຈາສະຖານະພາບປະເທດດ້ອຍພັດທະນາ ໃນປີ 2020. ເຖິງຢ່າງໃດກໍຕາມ, ເພື່ອຈະກ້າວໄປເຖິງຈຸດນັ້ນ, ສປປ ລາວ ຈະຕ້ອງແກ້ໄຂບັນຫາທ້າທາຍຫຼາຍຢ່າງ.

ເສດຖະກິດທີ່ຍັງອາໄສລາຍຮັບຈາກການຂຸດຄົ້ນບໍ່ແຮ່, ຂາຍໄມ້ ແລະ ພະລັງງານໄຟຟ້າພະລັງນໍ້າເປັນສ່ວນໃຫຍ່, ຕ້ອງໄດ້ພັນຂະຫຍາຍສູ່ຫຼາຍຂະແໜງເສດຖະກິດ ເພື່ອເຮັດໃຫ້ມີການສົ່ງອອກຜະລິດຕະພັນໃໝ່ ແລະ ສ້າງວຽກເຮັດງານທຳແກ່ຊາວໜຸ່ມ 96.000 ຄົນທີ່ກ້າວເຂົ້າເປັນກຳລັງແຮງງານໃນແຕ່ລະປີ. ໃນຂະນະດຽວກັນ, ຂະແໜງສຶກສາ ຕ້ອງຮັບປະກັນວ່າຊາວໜຸ່ມທີ່ກ້າວເຂົ້າໃນກຳລັງແຮງງານມີຝີມືວິຊາສະເພາະທີ່ "ຕະຫຼາດຕ້ອງການ". ນັກສຶກສາຮຽນຈົບທີ່ຂາດຄວາມຮູ້ວິຊາສະເພາະ ເຊິ່ງເປັນທີ່ຕ້ອງການຂອງຕະຫຼາດໄດ້ຖືກລະບຸວ່າເປັນ ຂໍ້ຈຳກັດອັນຕົ້ນຕໍໃຫ້ແກ່ການດຳເນີນທຸລະກິດຢູ່ໃນປະເທດ ອີງຕາມບົດລາຍງານຄວາມສາມາດແຂ່ງຂັນໃນໂລກສຳລັບປີ 2016-2017.

ການປັບປຸງສະພາບແວດລ້ອມທີ່ເໝາະສົມສຳລັບການເລີ່ມຕົ້ນ ແລະ ຂະຫຍາຍທຸລະກິດເອກະຊົນ ຊຶ່ງປຽບເໝືອນເປັນເຄື່ອງຈັກຂອງເສດຖະກິດສະໄໝໃໝ່ ແມ່ນຈຳເປັນເພື່ອຂັບເຄື່ອນໃຫ້ມີການເຕີບໂຕຂອງເສດຖະກິດຢ່າງທົ່ວເຖິງ, ໃນຂະນະດຽວກັນການຂະຫຍາຍການຍົກລະດັບໂຄງລ່າງພື້ນຖານ ກໍ່ຈຳເປັນ ຖ້າຫາກວ່າ ສປປ ລາວ ຈະໃຊ້ປະໂຫຍດຈາກບັນດາໂອກາດໃໝ່ທີ່ເກີດຈາກການສ້າງປະຊາຄົມເສດຖະກິດອາຊຽນ.

ການຢຸດທຳລາຍສິ່ງແວດລ້ອມ, ໂດຍສະເພາະແມ່ນ ໃນເຂດແຫຼ່ງກຳເນີດນໍ້າ ແລະ ປ່າໄມ້, ແມ່ນບັນຫາທ້າທາຍສຳຄັນອີກອັນໜຶ່ງ ແລະ ກາຍເປັນບັນຫາເລັ່ງດ່ວນທີ່ສຸດຕໍ່ກັບບັນຫາການປ່ຽນແປງດິນຟ້າອາກາດ, ເຊິ່ງຈະເຮັດໃຫ້ ເກີດໄພນໍ້າຖ້ວມ ແລະ ໄພແຫ້ງແລ້ງເລື້ອຍໆ ແລະ ຮຸນແຮງຍິ່ງຂຶ້ນ.

ເພື່ອຊ່ວຍລັດຖະບານໃນການຮັບມືກັບບັນຫາທ້າທາຍເຫຼົ່ານີ້ ແລະ ເພື່ອບັນລຸຕາມເປົ້າໝາຍການຂະຫຍາຍຕົວຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ VIII, ພາຍໃຕ້ຍຸດທະສາດການຮ່ວມມືກັບປະເທດ 2017-2020, ເອດີບີ ຈະສຸມໃສ່ 3 ຂົງເຂດຍຸດທະສາດ ຄື: ການພັດທະນາໂຄງລ່າງພື້ນຖານ ແລະ ພາກເອກະຊົນ ຊຶ່ງຈະຊ່ວຍສົ່ງເສີມການຈ້າງງານ ແລະ ສ້າງລາຍຮັບ, ການພັດທະນາຊັບພະຍາກອນມະນຸດ, ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ ແລະ ການສ້າງເງື່ອນໄຂໃນການປັບໂຕຕໍ່ກັບການປ່ຽນແປງຂອງສະພາບດິນຟ້າອາກາດ ໂດຍມີ ຄວາມສະເໝີພາບບົດບາດຍິງ-ຊາຍ ແລະ ການປົກຄອງບໍລິຫານ ຊຶ່ງເປັນບັນຫາທີ່ຕ້ອງເອົາໃຈໃສ່ໃນທຸກຂົງເຂດແລະຂະແໜງການ.



ທ່ານ ສຸວັດ ເກດສັດທາ ໄດ້ຮຽນຮູ້ເຕັກນິກການລ້ຽງສັດແບບທັນສະໃໝພາຍໃຕ້ໂຄງການສົ່ງເສີມການຜະລິດກະສິກຳເພື່ອເປັນສິນຄ້າທີ່ ເອດີບີ ໃຫ້ການສະໜັບສະໜູນ.

ໜຶ່ງໃນບັນດາຜົນສຳເລັດຂອງການດຳເນີນງານໃນຂະແໜງກະສິກຳຂອງ ເອດີບີ ແມ່ນການການຮ່ວມມືລະຫວ່າງພາກລັດ-ພາກເອກະຊົນ ແລະ ຊຸມຊົນ ຊຶ່ງໄດ້ຊ່ວຍໃຫ້ຊາວກະສິກອນຜູ້ທີ່ທຸກຍາກຫັນຈາກການເຮັດກະສິກຳເພື່ອກຸ້ມຕົນເອງ ໄປສູ່ການຜະລິດເພື່ອເປັນສິນຄ້າ.

ເປົ້າໝາຍການຊ່ວຍເຫຼືອ ພາຍໃຕ້ຍຸດທະສາດ ການຮ່ວມມືກັບປະເທດ, 2017-2020 ຂອງ ເອດີບີ ມີເປົ້າໝາຍ ເພື່ອເພີ່ມໂອກາດໃນການ ສ້າງວຽກເຮັດງານທຳ ແລະ ສ້າງລາຍໄດ້, ແລະ ສ້າງນັກສຶກສາ ທີ່ຮຽນຈົບໃຫ້ມີ ຄວາມພ້ອມ ຕໍ່ຄວາມ ຕ້ອງການຂອງຕະຫຼາດ ແຮງງານ, ພ້ອມນັ້ນ ກໍ່ປັບປຸງການຄຸ້ມຄອງ ຊັບພະຍາກອນທຳມະຊາດ ແລະ ການປັບຕົວຕໍ່ກັບ ການປ່ຽນແປງ ດິນຟ້າອາກາດ.

ເພື່ອຫລຸດບັນຫາຊ່ອງຫວ່າງດ້ານໂຄງລ່າງພື້ນຖານທີ່ມີຢູ່ ຊຶ່ງມັນເຮັດໃຫ້ເສຍປຽບດ້ານຄວາມສາມາດແຂ່ງຂັນ ແລະ ທັງເປັນອຸປະສັກຕໍ່ການລົງທຶນ, ເອດີບີ ຈະເພີ່ມທະວີເຮັດໃຫ້ການເຊື່ອມຕໍ່ລະຫວ່າງຕົວເມືອງແລະຊົນນະບົດໃຫ້ມີຄວາມເຂັ້ມແຂງ ແລະ ພ້ອມທັງປັບປຸງ ແລະ ບຳລຸງຮັກສາຕາໜ່າງການຂົນສົ່ງ ແລະ ໄຟຟ້າ. ບັນດາໂຄງການໂຄງລ່າງພື້ນຖານ ຈະສົ່ງເສີມໃຫ້ແມ່ຍິງມີສ່ວນຮ່ວມໃນການຕັດສິນໃຈ ແລະ ໃນການຈ້າງງານຂອງແມ່ຍິງ.

ການສະໜັບສະໜູນເພີ່ມຕື່ມຂອງ ເອດີບີ ສຳລັບມາດຕະການນະໂຍບາຍ ຈະຊ່ວຍໃຫ້ບັນດາຫົວໜ່ວຍວິສະຫະກິດຈຸນລະພາກ ຂະໜາດນ້ອຍ ແລະ ກາງ ໄດ້ຮັບປະໂຫຍດຈາກບັນດາໂອກາດໃໝ່ທີ່ເກີດຂຶ້ນຈາກການເຊື່ອມໂຍງຂອງເສດຖະກິດກັບພາກພື້ນ. ໃນຂະນະດຽວກັນ, ເອດີບີ ກໍ່ຈະສືບຕໍ່ສຸມໃສ່ໃນການຊ່ວຍເຫຼືອບັນດາມະຫາວິທະຍາໄລ ແລະ ສະຖາບັນອະຊີວະສຶກສາ ແລະ ອົບຮົມວິຊາຊີບ ໃນການປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງຂອງຫຼັກສູດ ເພື່ອສ້າງໃຫ້ນັກສຶກສາທີ່ຮຽນຈົບໃຫ້ກຽມພ້ອມຕອບສະໜອງໄດ້ຕໍ່ກັບຄວາມຕ້ອງການຂອງຕະຫຼາດແຮງງານ. ເອດີບີ ຍັງຈະຊ່ວຍສົ່ງເສີມຄວາມສາມາດຂອງແມ່ຍິງໃຫ້ ແທດເໝາະຕາມຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ພ້ອມທັງສົ່ງເສີມໃຫ້ເຂົາເຈົ້າໄດ້ເຂົ້າເຖິງການຝຶກອົບຮົມດ້ານສີໄມ້ລາຍມືໃນວຽກອາຊີບອື່ນໆທີ່ນອກເໜືອຈາກວຽກອາຊີບທີ່ເຄີຍໄດ້ປະຕິບັດສືບທອດກັນມາ, ພ້ອມດ້ວຍ ການປະຕິຮູບ ແລະ ປັບປຸງຂະແໜງສາທາລະນະສຸກ ທີ່ຈະຊ່ວຍໃຫ້ແມ່ຍິງ ແລະ ເດັກຍິງຈາກຊຸມຊົນຫ່າງໄກສອກຫຼີກໃຫ້ສາມາດເຂົ້າເຖິງການບໍລິການດ້ານສາທາລະນະສຸກທີ່ມີຄຸນນະພາບໄດ້.

ໃນຂະແໜງຊັບພະຍາກອນທຳມະຊາດ, ເອດີບີ ຈະສືບຕໍ່ຊ່ວຍເຫຼືອບັນດາຊາວກະສິກອນເພື່ອການຫັນປ່ຽນໄປສູ່ການຜະລິດກະສິກຳເພື່ອເປັນສິນຄ້າທີ່ຍືນຍົງຕໍ່ສິ່ງແວດລ້ອມ. ການສະໜັບສະໜູນດັ່ງກ່າວ ຍັງຈະໄດ້ຊ່ວຍປັບປຸງການຄຸ້ມຄອງ ແລະ ການວາງແຜນນຳໃຊ້ນ້ຳ ແລະ ທີ່ດິນ ແລະ ການນຳໃຊ້ມາດຕະການເພື່ອປັບຕົວເຂົ້າກັບການປ່ຽນແປງສະພາບດິນຟ້າອາກາດ. ການສະໜັບສະໜູນໃນຂະແໜງການທ່ອງທ່ຽວ ແລະ ກະສິກຳ ຈະຊ່ວຍໃຫ້ແມ່ຍິງໃຫ້ເຂົ້າເຖິງການຝຶກອົບຮົມດ້ານເຕັກນິກວິຊາຊີບຕ່າງໆ ພ້ອມທັງ ການພັດທະນາທຸລະກິດ, ຊຶ່ງລວມມີການຂະຫຍາຍແລະ ສ້າງຕ່ອງໂສ້ມູນຄ່າເພີ່ມຂອງການບໍລິການຕ່າງໆ, ແລະ ພ້ອມທັງການຝຶກອົບຮົບດ້ານການເງິນ ແລະ ການຕະຫຼາດ.

ເພື່ອເຮັດໃຫ້ທຶນຮອນເກີດປະໂຫຍດສູງສຸດ, ເອດີບີ ຈະເຮັດວຽກຢ່າງໃກ້ຊິດກັບບັນດາຄູ່ຮ່ວມພັດທະນາອື່ນໆ ເພື່ອໃຫ້ກົມກຽວກັນໃນດ້ານການໃຫ້ຄວາມຊ່ວຍເຫຼືອ ແລະ ລະດົມທຶນເພີ່ມຈາກບັນດາຜູ້ໃຫ້ທຶນສົມທົບຕ່າງໆ.

## ທຸບມ້າງວົງຈອນຄວາມທຸກຍາກໃນເຂດຊົນນະບົດດ້ວຍການສະໜັບສະໜູນຈາກພາກສ່ວນເອກະຊົນ

ການເຂົ້າເຖິງຄວາມຮູ້-ເຕັກນິກ, ທຶນ ແລະ ຕະຫຼາດ ແມ່ນສຳຄັນສຳລັບຊາວກະສິກອນທີ່ຢາກທຸບມ້າງວົງຈອນຄວາມທຸກຍາກ ແລະ ຫັນປ່ຽນຈາກການຜະລິດກະສິກຳເພື່ອກຸ້ມຕົນເອງ ໄປສູ່ການຜະລິດເພື່ອເປັນສິນຄ້າ. ເຖິງແມ່ນວ່າການຊ່ວຍເຫຼືອສະໜັບສະໜູນຈາກພາກລັດ ແລະ ຈາກບັນດາອົງການພັດທະນາຕ່າງໆຈະຊ່ວຍໃຫ້ຊາວກະສິກອນຫັນປ່ຽນການຜະລິດຄືດັ່ງກ່າວໄດ້ກໍຕາມ, ແຕ່ກໍ່ຍັງມີບົດບາດສຳຄັນຍິ່ງຂຶ້ນສຳລັບພາກເອກະຊົນ.

ໜຶ່ງໃນບັນດາຜົນສຳເລັດຂອງ ສປປ ລາວ ໃນການເຊື່ອມຕໍ່ຊາວກະສິກອນ ກັບ ພາກເອກະຊົນ ແມ່ນ ໂຄງການສົ່ງເສີມການຜະລິດກະສິກຳແລະປ່າໄມ້ແບບຍືນຍົງ ຊຶ່ງນຳໃຊ້ ຮູບແບບການຮ່ວມມືລະຫວ່າງພາກລັດ-ເອກະຊົນ ແລະ ຊຸມຊົນ ເພື່ອຊ່ວຍຊາວກະສິກອນຜູ້ທຸກຍາກ ຫັນປ່ຽນຈາກການຜະລິດກະສິກຳເພື່ອກຸ້ມຕົນເອງ ໄປສູ່ການຜະລິດເພື່ອເປັນສິນຄ້າ.

ພາຍໃຕ້ໂຄງການດັ່ງກ່າວ, ທະນາຄານພັດທະນາອາຊີ (ເອດີບີ) ໄດ້ສະໜອງທຶນໃຫ້ແກ່ ທ່ານ ອຳພອນສະຫວັນ ພົມພອນສີ, ຜູ້ປະກອບການທຸລະກິດສ່ວນຕົວທີ່ເປັນແມ່ຍິງ, ເພື່ອສ້າງສູນເພາະພັນສັດເຊັ່ນ ໄກ່, ໝູ ແລະ ເປັດ. ຜ່ານການຈັດຕັ້ງປະຕິບັດການຮ່ວມມື, ພາຍໃຕ້ຮູບການຮ່ວມມືລະຫວ່າງພາກລັດກັບເອກະຊົນ ແລະ ຊຸມຊົນດັ່ງກ່າວ, ນາງອຳພອນສະຫວັນ ໄດ້ສະໜອງ, ສັດລ້ຽງພັນພື້ນເມືອງທີ່ມີຄຸນະພາບສູງທີ່ໄດ້ຮັບການສີດວັກແຊງໃຫ້ແກ່ຊາວກະສິກອນ, ແລະ ສາມາດຈຳໜ່າຍໄດ້ໃນລາຄາສູງຕາມທ້ອງຕະຫຼາດທັງພາຍໃນປະເທດ ແລະ ໃນບັນດາປະເທດໃກ້ຄຽງ. ຜົນໄດ້ຮັບແມ່ນຊາວກະສິກອນທີ່ທຸກຍາກ, ຊຶ່ງເປັນຜູ້ທີ່ເຄີຍລ້ຽງສັດເພື່ອບໍລິໂພກເອງ, ສາມາດກາຍເປັນຜູ້ລ້ຽງສັດເພື່ອຂາຍເປັນສິນຄ້າໄດ້.

ການດຳເນີນການພາຍໃຕ້ຮູບການຮ່ວມມືພາກລັດກັບເອກະຊົນແລະຊຸມຊົນຄືດັ່ງກ່າວນັ້ນ ຍັງເປັນການສ້າງພື້ນຖານໃຫ້ແກ່ການຮ່ວມສັນຍາລະຫວ່າງຊາວກະສິກອນທີ່ລ້ຽງສັດໃຫຍ່ໃນເມືອງ ທຸລະຄົມ, ແຂວງວຽງຈັນ ພາຍໃຕ້ໂຄງການສົ່ງເສີມການຜະລິດກະສິກຳເພື່ອເປັນສິນຄ້າ, ແລະ ບໍລິສັດເອກະຊົນທີ່ນຳເຂົ້າປະເພດສັດລ້ຽງໃຫຍ່ຕ່າງໆຈາກຕ່າງປະເທດ.

ພາຍຫຼັງຜົນສຳເລັດໃນເບື້ອງຕົ້ນໃນການປັບປຸງຄຸນນະພາບຂອງງົວທີ່ລ້ຽງຢູ່ໃນທ້ອງຖິ່ນພາຍໃຕ້ໂຄງການດັ່ງກ່າວ, ໂດຍການເຮັດວຽກຮ່ວມກັບກະຊວງກະສິກຳ ແລະ ປ່າໄມ້ ແລະ ວິສາຫະກິດເອກະຊົນ ຊາວກະສິກອນຫຼາຍຄົນໄດ້ເຂົ້າຮ່ວມ. ເຮັດສັນຍາເພື່ອລ້ຽງສັດໃຫຍ່ທີ່ນຳເຂົ້າຈາກຕ່າງປະເທດ. ພາຍໃຕ້ຂໍ້ກຳນົດຂອງການຮ່ວມມື, ບັນດາຊາວກະສິກອນຜູ້ທີ່ໄດ້ຮັບສັດລ້ຽງທີ່ນຳເຂົ້າດັ່ງກ່າວ ຕ້ອງສະໜອງລູກງົວສອງໃນຈຳນວນສາມໂຕທີ່ເກີດໃນໄລຍະທຳອິດໃຫ້ແກ່ບໍລິສັດເອກະຊົນທີ່ລົງທຶນກ່ອນທີ່ຜູ້ລ້ຽງຈະໄດ້ຮັບສິດຄວາມເປັນເຈົ້າຂອງສັດທີ່ນຳເຂົ້ານັ້ນຢ່າງເຕັມສ່ວນ.

ໂຄງການດັ່ງກ່າວຍັງໄດ້ຈັດໃຫ້ບັນດາຊາວກະສິກອນໄປທັດສະນະສຶກສາຢູ່ຕ່າງປະເທດ ເພື່ອຮຽນຮູ້ເຕັກນິກການລ້ຽງສັດແບບທັນສະໄໝຂອງຕ່າງປະເທດ, ພ້ອມທັງ ການນຳໃຊ້ອຸປະກອນເພື່ອຜະລິດອາຫານສັດແບບທັນສະໄໝ. ທ່ານ ສຸວັດ ເກດສັດທາ ຫົວໜ້າກຸ່ມລ້ຽງງົວຢູ່ບ້ານຄານ, ເມືອງ ທຸລະຄົມ ກ່າວວ່າ ໂດຍການຮວມໂຕກັນເພື່ອລ້ຽງສັດ, ຜົນໄດ້ຮັບແມ່ນວິທີການລ້ຽງງົວຂອງສະມາຊິກຊາວກະສິກອນພາຍໃນກຸ່ມໄດ້ມີການປ່ຽນແປງຢ່າງຊັ້ນເຊີງ.

"ໃນອະດີດ, ພວກເຮົາມີແຕ່ປ່ອຍໃຫ້ສັດຂອງພວກເຮົາຫາກິນຊະຊາຍ, ໂດຍປ່ອຍໃຫ້ພວກມັນກິນສິ່ງທີ່ພວກມັນສາມາດຊອກໄດ້, ແລະ ສິ່ງນີ້ເຮັດໃຫ້ສັດຈ່ອຍຜອມ ແລະ ຕິດພະຍາດ. ໃນປະຈຸບັນ ຂ້ອຍໄດ້ຮຽນຮູ້ ກ່ຽວກັບປະເພດອາຫານ ແລະ ໂພຊະນາການທີ່ສັດລ້ຽງຕ້ອງການ ແລະ ວິທີການປ້ອງກັນພະຍາດລະບາດໃນຝູງສັດ. ຜົນທີ່ໄດ້ຮັບ, ຂ້າພະເຈົ້າສາມາດລ້ຽງສັດໃຫ້ຕຸ້ຍພີ, ມີສຸຂະພາບດີ ຂຶ້ນ ຊຶ່ງສາມາດຂາຍໄດ້ໃນລາຄາສູງຂຶ້ນເປັນສອງເທົ່າເມື່ອສົມທຽບກັບລາຄາທີ່ຂ້າພະເຈົ້າຂາຍໄດ້ໃນເມື່ອກ່ອນ."

## ບົດລາຍງານສັງລວມປະສິດທິຜົນຂອງການພັດທະນາ: ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

*ກ້າວພົ້ນອອກຈາກສະພາບປະເທດດ້ອຍພັດທະນາ*

ການຊ່ວຍເຫຼືອຂອງທະນາຄານພັດທະນາອາຊີ (ເອດີບີ) ໄດ້ຊ່ວຍໃຫ້ ສປປ ລາວ ມີຄວາມໝັ້ນຄົງກຸ້ມຕົນເອງດ້ານເຂົ້າກິນ, ຍົກລະດັບເສັ້ນທາງ, ປັບປຸງການບໍລິການດ້ານສາທາລະນະສຸກ, ການສຶກສາ, ການບໍລິການນໍ້າໃຊ້ ແລະ ສຸຂະອະນາໄມ, ສ້າງຄວາມເຂັ້ມແຂງໃຫ້ທັງພາກລັດ ແລະ ເອກະຊົນ, ປົກປັກຮັກສາຊັບພະຍາກອນທຳມະຊາດ, ແລະ ສ້າງການເຊື່ອມຕໍ່ທີ່ເຂັ້ມແຂງກັບບັນດາປະເທດໃກ້ຄຽງ. ເອດີບີ ໄດ້ໃຫ້ທຶນກູ້ຢືມ ແລະ ທຶນຊ່ວຍເຫຼືອລ້າປະມານ 2,3 ຕື້ໂດລາສະຫະລັດ ແລະ ທຶນຊ່ວຍເຫຼືອທາງດ້ານວິຊາການປະມານ 156 ລ້ານໂດລາສະຫະລັດ, ແລະ ໃນຂະນະທີ່ສປປ ລາວກຳລັງກ້າວໄປສູ່ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາໃນປີ 2020 ເອດີບີ ຍັງຄົງເປັນໜຶ່ງໃນບັນດາຄູ່ຮ່ວມພັດທະນາທີ່ສຳຄັນສຳລັບປະເທດ. ເອກະສານສະບັບນີ້ ໄດ້ລະບຸລາຍລະອຽດກ່ຽວກັບການປະຕິບັດງານຂອງ ເອດີບີ ໃນທົ່ວທຸກຂະແໜງການທີ່ສຳຄັນ, ເຊິ່ງໄດ້, ຍົກໃຫ້ເຫັນເຖິງຜົນໄດ້ຮັບຈາກການພັດທະນາໃນຂົງເຂດສຳຄັນ, ພ້ອມທັງ ບັນດາສິ່ງທ້າທາຍທີ່ຍັງຄົງມີຢູ່.

### ກ່ຽວກັບທະນາຄານພັດທະນາອາຊີ

ວິໄສທັດຂອງ ເອດີບີ ແມ່ນການເຮັດໃຫ້ພາກພື້ນອາຊີ ແລະ ປາຊີປະສະຈາກຄວາມທຸກຍາກ. ພາລະກິດຂອງ ເອດີບີ ແມ່ນເພື່ອຊ່ວຍບັນດາປະເທດສະມາຊິກກຳລັງພັດທະນາໃຫ້ຫຼຸດພົ້ນຈາກຄວາມທຸກຍາກ ແລະ ປັບປຸງຄຸນນະພາບຊີວິດຂອງປະຊາຊົນຂອງພວກເຂົາໃຫ້ດີຂຶ້ນ. ເຖິງແມ່ນວ່າ ໃນພາກພື້ນຈະໄດ້ຮັບຜົນສຳເລັດໃນຫຼາຍດ້ານກໍ່ຕາມ, ແຕ່ກໍ່ຍັງມີປະຊາກອນທີ່ທຸກຍາກຂອງໂລກສ່ວນໃຫຍ່ອາໄສຢູ່ໃນພາກພື້ນນີ້. ເອດີບີ ມີຄວາມມຸ່ງໝັ້ນຕໍ່ການຫຼຸດຜ່ອນຄວາມທຸກຍາກ ໂດຍຜ່ານການເຕີບໂຕທາງດ້ານເສດຖະກິດແບບທົ່ວເຖິງ, ການເຕີບໂຕທີ່ຍືນຍົງດ້ານສິ່ງແວດລ້ອມ ແລະ ການເຊື່ອມໂຍງພາກພື້ນ.

ເອດີບີ ມີສຳນັກງານໃຫຍ່ຕັ້ງຢູ່ທີ່ນະຄອນຫຼວງມະນີລາ, ມີປະເທດສະມາຊິກທັງໝົດ 67 ປະເທດ, ໃນນັ້ນມີ 48 ປະເທດທີ່ມາຈາກພາກພື້ນອາຊີແລະປາຊີຟິກ. ເຄື່ອງມືຫຼັກໃນການຊ່ວຍເຫຼືອບັນດາປະເທດສະມາຊິກກຳລັງພັດທະນາຂອງ ເອດີບີ ແມ່ນປຶກສາຫາລືທາງດ້ານນະໂຍບາຍ, ເງິນກູ້ຢືມ, ການລົງທຶນໃນຫຸ້ນສ່ວນ, ການຄ້ຳປະກັນ, ທຶນຊ່ວຍເຫຼືອລ້າ ແລະ ທຶນຊ່ວຍເຫຼືອທາງດ້ານວິຊາການ.

ທະນາຄານພັດທະນາອາຊີ
ຖະໜົນ 6 ເອດີບີ, ເມືອງ ມັນດາລູຢົງ
1550 ກຸງມະນີລາ, ປະເທດຟີລິບປິນ
www.adb.org